# ຜູ້ແທນປະຊາຊົນ
**PHOUTHEN PASAXON**

19-22 ກຸມພາ 2022
ປີທີ 11
ສະບັບທີ 821

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ເວີ່ນທາດຫຼວງ ຕູ້ ປ.ນ 662 ໂທລະສັບ ແລະ ໂທລະສານ: 413522, 454563 Email: phouthen.na@gmail.com


## ຮອງປະທານ ສພຊ ເຄື່ອນໄຫວພົບປະ ຜູ້ມີສິດເລືອກຕັ້ງ ທີ່ແຂວງສະຫວັນນະເຂດ



(ສພຊ) ລະຫວ່າງວັນທີ 14-17 ກຸມພາ 2022, ທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ) ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ພ້ອມດ້ວຍຄະນະ ໄດ້ສົມທົບກັບສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ເຄື່ອນ

ອ່ານຕໍ່ໜ້າ 2

## ສພຊ ຟັງປາຖະກະຖາ ກ່ຽວກັບ ຜົນສຳເລັດຂອງການປະຕິວັດຊາດກູ້ບາ



ໜ້າ 2

## ສຳເລັດການເຄື່ອນໄຫວອອກວຽກງານ ຢູ່ແຂວງຈຳປາສັກ ຂອງຮອງປະທານ ສພຊ




ໜ້າ 2

## ຜົນສຳເລັດການພົບປະຜູ້ມີສິດເລືອກຕັ້ງ ຢູ່ແຂວງໄຊຍະບູລີ

(ສພຊ) ລະຫວ່າງວັນທີ 14-16 ກຸມພາ 2022 ທ່ານ ພົນໂທ ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ (ສພຊ) ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ຮ່ວມກັບທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງໄຊຍະບູລີ ແລະ ສສຊ ປະຈຳເຂດເລືອກຕັ້ງທີ 7 ພ້ອມດ້ວຍຄະນະ ໄດ້ລົງຢ້ຽມຢາມ

ອ່ານຕໍ່ໜ້າ 3



## ພົບປະຜູ້ມີສິດເລືອກຕັ້ງ ຢູ່ບ້ານກໍໄຮ



(ສພຊ) ວັນທີ 28 ມັງກອນ 2022 ທ່ານ ແກ້ວຈະເລີນ ເຊ່ຍຢີ້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ (ກບຜ) ສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ພ້ອມດ້ວຍຄະນະ ໄດ້ລົງພົບປະພໍ່ແມ່ປະຊາຊົນ ຢູ່ບ້ານກໍໄຮ ເມືອງຊຳເໜືອ ແຂວງຫົວພັນ.

ການລົງພົບປະຢ້ຽມຢາມຄັ້ງນີ້, ທ່ານ ແກ້ວຈະເລີນ ເຊ່ຍຢີ້ງຢ່າງ ໄດ້ໂອ້ລົມ ແລະ ຊຸກຍູ້ໃຫ້ພໍ່ແມ່ປະຊາຊົນ ປັບປຸງແບບແຜນການດຳລົງຊີວິດຕາມແບບໃໝ່ ແລະ ເອົາໃຈໃສ່ສ້າງເສດຖະກິດຄອບຄົວ ດ້ວຍການປູກຝັງ, ລ້ຽງສັດ ເພື່ອສ້າງລາຍຮັບເຂົ້າສູ່ຄອບຄົວ, ເຮັດໃຫ້ຄອບຄົວ ກໍຄືພາຍໃນບ້ານຫລຸດພົ້ນອອກຈາກຄວາມທຸກຍາກ, ພ້ອມກັນຕ້ານ, ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ໃຫ້ເຂັ້ມງວດ ແລະ ແກ້ໄຂບັນຫາປາກົດການຫຍໍ້ທໍ້ຕ່າງໆ ພາຍໃນບ້ານໃຫ້ໝົດໄປເທື່ອລະກ້າວ.

ອ່ານຕໍ່ໜ້າ 3

## ສພຂ ຫົວພັນ ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ຫົວພັນ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນວັນທີ 28 ມັງກອນ 2022 ທີ່ຫ້ອງປະຊຸມໃຫຍ່ ຂອງ ສພຂ ເຊິ່ງໄດ້ດຳເນີນເປັນເວລາ 2 ວັນເຄິ່ງ (26-28 ມັງກອນ 2022)

ອ່ານຕໍ່ໜ້າ 3



## ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຫລວງນ້ຳທາ ຊຸດທີ II

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນວັນທີ 28 ມັງກອນຜ່ານມາ, ພາຍຫລັງດຳເນີນມາເປັນເວລາ 3 ວັນ ຢູ່ສະໂມສອນຂອງແຂວງ ໂດຍການເປັນປະທານຂອງທ່ານ

ອ່ານຕໍ່ໜ້າ 3





## ຮອງປະທານ...

ໄຫວພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ຢູ່ທີ່ສະໂມສອນເມືອງວິລະບູລີ ແຂວງສະຫວັນນະເຂດ, ຈຸດສຸມກະແຕບ-ນາຜາດ່າງ ແລະ ເຂດຈຸດສຸມເມືອງວັງ ມີບັນດາທ່ານຄະນະນຳຂອງເມືອງ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫລວດ, ພະນັກງານ-ລັດຖະກອນ, ຄະນະອຳນາດການປົກຄອງບ້ານເທສະບານອ້ອມຂ້າງເມືອງວິລະບູລີ, ຄະນະອຳນາດການປົກຄອງບ້ານ ພ້ອມດ້ວຍປະຊາຊົນເຂດຈຸດສຸມກະແຕບ ແລະຈຸດສຸມເມືອງວັງເຂົ້າຮ່ວມ.

ໂດຍໄດ້ຮັບການກ່າວຕ້ອນຮັບຈາກທ່ານ ຄຳພຸຍ ສີບຸນເຮືອງ ກຳມະການພັກແຂວງ ເລຂາພັກເມືອງ ເຈົ້າເມືອງວິລະບູລີ ແລະ ລາຍງານໂດຍຫຍໍ້ກ່ຽວກັບສະພາບລວມຂອງການນຳພາ-ຊີ້ນຳ ວຽກງານແຕ່ລະດ້ານ ແລະ ທິດທາງວຽກງານຈຸດສຸມປີ 2022 ຂອງເມືອງວິລະບູລີ; ຮັບຟັງບົດລາຍງານຫຍໍ້ການຊີ້ນຳ-ນຳພາຂອງຈຸດສຸມກະແຕບ-ນາຜາດ່າງ ແລະ ບົດລາຍງານຫຍໍ້ການຊີ້ນຳ-ນຳພາຂອງຈຸດສຸມເມືອງວັງ ຈາກທ່ານຫົວໜ້າຈຸດສຸມດັ່ງກ່າວ. ຈາກນັ້ນ, ກອງປະຊຸມໄດ້ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ຈາກສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13.

ໂອກາດດັ່ງກ່າວ, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ຕີລາຄາສູງ ຕໍ່ຜົນງານການເມືອງທີ່ຍາດມາໄດ້ ພ້ອມທັງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 1 ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ທີ່ໄດ້ໄຂຂຶ້ນລະຫວ່າງວັນທີ 1-17 ພະຈິກ 2021 ເຊິ່ງໄດ້ພິຈາລະນາຮັບຮອງເອົາຫລາຍບັນຫາສຳຄັນຂອງຊາດ, ຂອງທ້ອງຖິ່ນ ແລະ ໄດ້ອອກເປັນມະຕິກອງປະຊຸມຈຳນວນຫລາຍມະຕິ ທີ່ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໄດ້ສຸມໃສ່ຈັດຕັ້ງປະຕິບັດ. ທ່ານຮອງປະທານ ສພຊ ໄດ້ເນັ້ນໃຫ້ອຳນາດການປົກຄອງເມືອງ, ອຳນາດການປົກຄອງບ້ານຈຸດສຸມ ເອົາໃຈໃສ່ຈັດຕັ້ງປະຕິບັດວາລະແຫ່ງຊາດ, ລັດຖະທຳມະນູນ, ກົດໝາຍ ແລະ ມະຕິຕ່າງໆຢ່າງເຂັ້ມງວດ. ພ້ອມນັ້ນ,ຍັງໄດ້ຮັບຟັງຂໍ້ສະເໜີຕ່າງໆ ຈາກອົງການປົກຄອງບ້ານ ກໍຄື ພໍ່ແມ່ປະຊາຊົນ ໃນສອງເຂດຈຸດສຸມດັ່ງກ່າວ.

ໂອກາດນີ້ ທ່ານຮອງປະທານ ສພຊ ຍັງໄດ້ມອບເຄື່ອງຊ່ວຍເຫລືອໃຫ້ປະຊາຊົນ ແລະ ໂຮງຮຽນບ້ານກະແຕບ (ຈຸດສຸມກະແຕບ), ໂຮງຮຽນແກ້ວວິໄລ (ຈຸດສຸມເມືອງວັງ), ຫ້ອງວ່າການປົກຄອງເມືອງວິລະບູລີ ແລະ ສະພາປະຊາຊົນແຂວງສະຫວັນນະເຂດ ເຊິ່ງປະກອບມີ: ຜ້າອັດປາກ-ດັງ, ເຈວລ້າງມື, ທິດຊູປຽກ, ເຄື່ອງນຸ່ງຫົ່ມ, ຖົງພາຍ ແລະ ອຸປະກອນການຮຽນ (ປຶ້ມ, ສໍສີ, ຢາງລຶບ, ໄມ້ບັນທັດ) ແລະ ອຸປະກອນກິລາ ຈຳນວນໜຶ່ງ ລວມມູນຄ່າທັງໝົດ 26 ລ້ານກວ່າກີບ ແລະ ອຸປະກອນກອງປະຊຸມທາງໄກ (ສະມາດບອດ) 1 ເຄື່ອງ ມູນຄ່າ 150 ລ້ານກີບ.

ໂອກາດດຽວກັນນີ້, ທ່ານ ນາງ ສູນທອນ ໄຊຍະຈັກ ຍັງໄດ້ຢ້ຽມຢາມກຸ່ມການຜະລິດໝາກກ້ຽງ ເພື່ອຢ້ຽມຊົມຜົນຜະລິດຂອງປະຊາຊົນທີ່ເປັນຄອບຄົວຕົວແບບດ້ານການຜະລິດຂອງເມືອງວິລະບູລີ ແລະ ຢ້ຽມຊົມບໍ່ຄຳເຊໂປນ (ອ່າງນ້ຳຫາງແຫ່) ເພື່ອເກັບກຳຂໍ້ມູນກ່ຽວກັບການບຳບັດນ້ຳເສຍ ແລະ ຊຸກຍູ້ໃຫ້ບໍລິສັດຂຸດຄົ້ນແຮ່ທາດດັ່ງກ່າວ ເອົາໃຈໃສ່ໃນການຮັກສາສິ່ງແວດລ້ອມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ພໍ່ແມ່ປະຊາຊົນເຂດດັ່ງກ່າວ ໂດຍສະເພາະແມ່ນເອົາໃຈໃສ່ໃນການປັບປຸງ-ປົວແປງຖະໜົນຫົນທາງໃຫ້ດີຂຶ້ນ.

(ນາງ ກິ່ງໃຈ ແສງອຳພົນ)



## ສຳເລັດ...

(ສພຊ) ລະຫວ່າງວັນທີ 9-14 ກຸມພາຜ່ານມາ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ (ສພຊ) ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ສົມທົບກັບບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ພ້ອມດ້ວຍຄະນະ ໄດ້ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຮັດວຽກຢູ່ແຂວງຈຳປາສັກ ໂດຍປະກອບມີຫລາຍຈຸດເຄື່ອນໄຫວຄື: ພົບປະພະນັກງານການນຳ ແລະ ລັດຖະກອນຢູ່ສຳນັກງານເມືອງສຸຂຸມາ, ບ້ານຫ້ວຍແຫ່, ບ້ານໂນນຍາງ ແລະ ບ້ານຫາດສາມປາງ; ໄດ້ເຂົ້າຮ່ວມເປັນຄະນະປະທານ ພິທີເປີດໂຄງການປັບປຸງສະພາບແວດລ້ອມສີຂຽວຕາມເສັ້ນທາງຫລວງ ແລະ ສອນສາທາລະນະໃນນະຄອນປາກເຊ; ພົບປະນາຍ ແລະພົນທະຫານກອງບັນຊາການທະຫານແຂວງຈຳປາສັກ ແລະ ໂຮງຮຽນວຽງໄຊ; ຢ້ຽມຢາມບໍລິສັດດ້າຍຖັກ ແລະ ກຸ່ມຜະລິດພືດສະອາດຂອງປະຊາຊົນບ້ານຫ້ວຍເສັດ (ເມືອງປາກຊ່ອງ); ຢ້ຽມຢາມດ່ານຂົນສົ່ງທ່າບົກວັງເຕົ່າ, ເຂົ້າຮ່ວມເປັນຄະນະປະທານພິທີເປີດງານປູກຕົ້ນດອກຈຳປາ (ຢູ່ວັດພູຈຳປາສັກ) ແລະ ພົບປະພະນັກງານການນຳ ແລະ ລັດຖະກອນ ສຳນັກງານປົກຄອງແຂວງຈຳປາສັກ.

ຈຸດປະສົງຂອງການເຄື່ອນໄຫວວຽກງານຄັ້ງນີ້ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນ ເທື່ອທີ 1, ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ພ້ອມທັງຮັບຟັງຄຳຄິດເຫັນຄຳສະເໜີຂອງຜູ້ມີສິດເລືອກຕັ້ງ.

ການເຄື່ອນໄຫວໃນແຕ່ລະຈຸດ ໄດ້ຮັບຟັງການລາຍງານສະພາບຈຸດພິເສດຂອງການນຳພາຈັດຕັ້ງປະຕິບັດວຽກງານ ຈາກບັນດາຄະນະນຳ ແລະ ອຳນາດການປົກຄອງ ເຊິ່ງເຫັນໄດ້ຜົນງານດ້ານດີ ແລະ ຂໍ້ຄົງຄ້າງບາງດ້ານ ທີ່ຈະຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດ.

ໂອກາດດັ່ງກ່າວ, ທ່ານ ສົມມາດ ພົລເສນາ ໄດ້ຕີລາຄາສູງຕໍ່ຜົນງານຂອງແຕ່ລະພາກສ່ວນຍາດມາໄດ້ ພ້ອມທັງມີຄຳເຫັນໂອ້ລົມ ໂດຍໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝວິສາມັນ ເທື່ອທີ 1, ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ທີ່ໄດ້ພິຈາລະນາຮັບຮອງເອົາຫລາຍບັນຫາສຳຄັນທີ່ເປັນພື້ນຖານຂອງຊາດ ແລະ ຂອງທ້ອງຖິ່ນ ອອກເປັນມະຕິກອງປະຊຸມຈຳນວນຫລາຍມະຕິ ໂດຍສະເພາະເນື້ອໃນຂອງ 2 ວາລະແຫ່ງຊາດ ທີ່ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ຈະໄດ້ສຸມໃສ່ໃນການຈັດຕັ້ງປະຕິບັດ.

ນອກຈາກນັ້ນ, ຄະນະຍັງໄດ້ຢ້ຽມຢາມຖາມຂ່າວ ແລະ ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຈາກຜູ້ມີສິດເລືອກຕັ້ງ, ພໍ່ແມ່ປະຊາຊົນບັນດາເຜົ່າ ເຊິ່ງສ່ວນຫລາຍແມ່ນບັນຫາທີ່ຕິດພັນກັບວຽກງານການສ້າງສາພັດທະນາປະເທດຊາດ ກໍຄືທ້ອງຖິ່ນຂອງຕົນ, ການພັດທະນາທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ວຽກງານການສຶກສາ, ວຽກງານການທ່ອງທ່ຽວ ແລະ ອື່ນໆ. ຕໍ່ກັບຄຳສະເໜີຂອງຜູ້ມີສິດເລືອກຕັ້ງ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ຜັດປ່ຽນກັນຊີ້ແຈງອະທິບາຍຕໍ່ບາງຄຳສະເໜີກັບທີ່ ພ້ອມທັງຮັບເອົາບາງຄຳສະເໜີທີ່ບໍ່ສາມາດຊີ້ແຈງໄດ້ ເພື່ອນຳໄປຊຸກຍູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂ.

(ສົມວິຈິດ ໄຊມົນຕີ)



## ສພຊ...

(ສພຊ) ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມມາແຕ່ດົນນານ ລະຫວ່າງສອງປະເທດລາວ-ກູບາ ກໍຄືລະຫວ່າງປະຊາຊົນສອງຊາດ ເວົ້າສະເພາະແມ່ນລະຫວ່າງສອງອົງການນິຕິບັນຍັດ ໄດ້ຮັບການສືບຕໍ່ເສີມຂະຫຍາຍ ແລະ ຈະເລີນງອກງາມຍິ່ງໆຂຶ້ນ. ພິທີປາຖະກະຖາ ກ່ຽວກັບການນຳພາຂອງພັກ, ການຄຸ້ມຄອງຂອງລັດ ແລະ ການປົກປັກຮັກສາໝາກຜົນຂອງການປະຕິວັດຊາດກູບາ ໃນໄລຍະຜ່ານມາ ໄດ້ຈັດຂຶ້ນໃນວັນທີ 14 ກຸມພາ 2022 ທີ່ຫໍສະພາແຫ່ງຊາດ ເຊິ່ງປາຖະກະຖາໂດຍ ສະຫາຍ ປາໂບຣ ອານໂຕນີໂອ ໂຣດີເກດສ ບີດານ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ກູບາ ປະຈຳ ສປປລາວ ໂດຍການເຂົ້າຮ່ວມ ແລະ ເປັນປະທານກ່າວປິດຂອງ ສະຫາຍ ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາ ລະຫວ່າງລາວ-ກູບາ; ມີ ສະຫາຍ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດລາວ, ມີບັນດາສະຫາຍຄະນະພັກ, ຄະນະໜ່ວຍພັກ, ສະມາຊິກພັກ ແລະ ພະນັກງານພາຍໃນສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດນີ້, ສະຫາຍ ປາໂບຣ ອານໂຕນີໂອ ໂຣດີເກດສ ບີດານ ໄດ້ລາຍງານ ແລະ ປາຖະກະຖາໃຫ້ຮູ້ ກ່ຽວກັບສະພາບຂອງ ສ.ກູບາ ແລະ ການນຳພາຂອງພັກ, ການຄຸ້ມຄອງຂອງລັດ ໃນການຮັກສາໝາກຜົນຂອງການຕໍ່ສູ້ປະຕິວັດຊາດກູບາ ໃນໄລຍະຜ່ານມາ ເຊິ່ງ ສ.ກູບາ ເປັນປະເທດທີ່ເດີນຕາມແນວທາງສັງຄົມນິຍົມ ເຖິງແມ່ນວ່າການປະຕິວັດຂອງກູບາຈະປະສົບກັບອຸປະສັກຕ່າງໆມາເປັນໄລຍະເວລາຫລາຍກວ່າ 63 ປີ ແຕ່ກູບາ ກໍສາມາດຍາດໄດ້ຜົນສຳເລັດທີ່ຍິ່ງໃຫຍ່ ຈົນໄດ້ຮັບເອກະລາດໃນວັນທີ 1 ມັງກອນ 1959 ແລະ ໄດ້ຮັບການສ້າງສາພັດທະນາປະເທດຊາດຢ່າງຮອບດ້ານ ເຮັດໃຫ້ປະເທດກູບາ ເປັນປະເທດໜຶ່ງທີ່ມີການພັດທະນາທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ຢ່າງບໍ່ຢຸດຢັ້ງ. ໂອກາດດຽວກັນນີ້, ຍັງໄດ້ມີການແລກປ່ຽນຄຳຄິດຄຳເຫັນ ຖາມ-ຕອບບາງບັນຫາທີ່ມີຄວາມສົນໃຈ ຢ່າງກົງໄປກົງມາ ລະຫວ່າງຜູ້ເຂົ້າຮ່ວມ ແລະ ສະຫາຍ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ກູບາປະຈຳສປປລາວຕື່ມອີກ.

ຕອນທ້າຍຂອງພິທີ, ສະຫາຍ ຈະເລີນ ເຢຍປາວເຮີ ໄດ້ກ່າວສະແດງຄວາມຊົມເຊີຍຕໍ່ໝາກຜົນສຳເລັດອັນໃຫຍ່ຫລວງຂອງ ສ.ກູບາ ທີ່ຍາດມາໄດ້ໃນໄລຍະແຫ່ງການປະຕິວັດຊາດ ກໍຄືໄລຍະແຫ່ງການສ້າງສາພັດທະນາປະເທດຊາດໃນປັດຈຸບັນ ທັງຮຽກຮ້ອງໃຫ້ສະມາຊິກພັກ, ພະນັກງານພາຍໃນສະພາແຫ່ງຊາດ ສືບຕໍ່ຮໍ່າຮຽນເອົາບົດຮຽນທີ່ດີ ແລະ ຍອດຍິ່ງຂອງ ສ.ກູບາ ເພື່ອມາພັດທະນາ ແລະ ປັບໃຊ້ໃຫ້ເຂົ້າກັບສະພາບຕົວຈິງຂອງປະເທດເຮົາ; ພ້ອມນີ້, ຍັງສະແດງຄວາມຊົມເຊີຍຕໍ່ການພົວພັນຮ່ວມມືຂອງທັງສອງປະເທດລາວ-ກູບາ ແລະ ກູບາ-ລາວ ໃນໄລຍະຜ່ານມາ ແລະ ຫວັງວ່າການຮ່ວມມືຂອງທັງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຈະໄດ້ຮັບການສືບຕໍ່ຮ່ວມມືຢ່າງບໍ່ຢຸດຢັ້ງ ແລະ ດີຍິ່ງຂຶ້ນເລື້ອຍໆ.

(ນາງ ປາກາລັກ ພົມມີໄຊ)



## ຜົນສຳເລັດ...



ຜົນປະກັບຜູ້ມີສິດເລືອກຕັ້ງ ທີ່ສະໂມສອນກອງພົນທີ 2 ກະຊວງປ້ອງກັນປະເທດ ໂດຍການຕ້ອນຮັບຂອງ ທ່ານ ພົນໂທ ບຸນເດີມ ດວງຈຳປາ ຮອງຫົວໜ້າການເມືອງກອງພົນທີ 2, ມີບັນດາຄະນະພັກຄະນະນຳ, ນາຍ ແລະ ພົນທະຫານພາຍໃນກອງພົນທີ 2 ເຂົ້າຮ່ວມ.

ທັງນີ້ ເພື່ອເປັນການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສສຊ ປະຈຳເຂດເລືອກຕັ້ງ ໃນການເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ແລະ ໂຄສະນາເຜີຍແຜ່ບັນດາເນື້ອໃນບັນຫາສຳຄັນຕ່າງໆ ທີ່ລັດຖະບານສະເໜີຕໍ່ກອງປະຊຸມສະພາແຫ່ງຊາດພິຈາລະນາ ໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈ ທັງເປັນການລົງພົບປະຜູ້ມີສິດເລືອກຕັ້ງເພື່ອເກັບກຳຄຳຄິດຄຳເຫັນຕໍ່ວຽກງານຄຸ້ມຄອງບໍລິຫານລັດ.

ຄະນະ ສສຊ ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບສະພາບການເຄື່ອນໄຫວ, ຜົນງານອັນພົ້ນເດັ່ນທີ່ກອງພົນທີ 2 ຍາດມາໄດ້ໃນໄລຍະຜ່ານມາ ແລະ ຄຳສະເໜີຕ່າງໆ ເປັນຕົ້ນແມ່ນບັນຫາການຄຸ້ມຄອງສິນຄ້າເຊັ່ນ: ລາຄາວັດສະດຸກໍ່ສ້າງ, ລາຄານ້ຳມັນ; ບັນຫາເສັ້ນທາງເປ່ເພເຫັນວ່າບໍ່ມີການສ້ອມແປງ; ບັນຫາຂອງການລົງທຶນຂອງຕ່າງປະເທດ; ບັນຫາການປູກຝັງລ້ຽງສັດຍັງຊະຊາຍ; ບັນຫາການລົງທຶນກໍ່ສ້າງພື້ນຖານໂຄງລ່າງ ແລະ ສະໜາມຫັດແອບຊ້ອມຮົບ ຈາກນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ກໍໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ພ້ອມທັງຕອບຂໍ້ຂ້ອງໃຈ ແລະ ບັນດາບັນຫາທີ່ຄະນະພັກຄະນະນຳກອງພົນທີ 2 ນຳມາສະເໜີຕາມສະພາບຄວາມເປັນຈິງ.

ໂອກາດດັ່ງກ່າວ, ທ່ານ ພົນໂທ ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນໂອ້ລົມຕໍ່ຄະນະພັກຄະນະນຳກອງພົນທີ 2 ໂດຍທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານພົ້ນເດັ່ນທີ່ທາງກອງພົນທີ 2 ຍາດມາໄດ້ ແລະ ຍົກໃຫ້ເຫັນມູນເຊື້ອພິລະອາດຫານທີ່ມີມາແຕ່ອະດີດໃນພາລະກິດປົດປ່ອຍປະເທດຊາດ ຈົນເຖິງພາລະກິດປົກປັກຮັກສາປະເທດຊາດ; ຍົກໃຫ້ເຫັນຫລາຍບັນຫາສຳຄັນທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາ ແລະ ທ່ານໄດ້ເນັ້ນໃຫ້ບັນດາຄະນະພັກຄະນະນຳ ແລະ ອ້າຍນ້ອງນາຍ ແລະ ພົນທະຫານພາຍໃນກອງພົນທີ 2 ໃຫ້ສືບຕໍ່ຮັກສາມູນເຊື້ອອັນດີງາມທີ່ເຄີຍມີມາ, ໃຫ້ເປັນແບບຢ່າງນຳໜ້າໃນການປະຕິບັດເຄົາລົບລັດຖະທຳມູນ, ກົດໝາຍ, ໃຫ້ເຂົ້າຮ່ວມປະກອບສ່ວນຕັ້ງໜ້າແກ້ໄຂບັນຫາຂໍ້ຫຍຸ້ງຍາກ ແລະ ຄຽງບ່າຄຽງໄຫລ່ກັບກຳລັງປ້ອງກັນຄວາມສະຫງົບແຂວງ ແລະ ປະຊາຊົນໃນການປະຕິບັດສອງວາລະແຫ່ງຊາດ ໃຫ້ມີຜົນສຳເລັດ, ຮັກສາຄວາມສະຫງົບຄວາມສາມັກຄີພາຍໃນຢ່າງໜັກແໜ້ນ ເອົາໃຈໃສ່ສືບຕໍ່ປະຕິບັດມາດຕະການການດຳລົງຊີວິດປົກກະຕິແບບໃໝ່ ພາຍໃຕ້ເງື່ອນໄຂຂອງການຕ້ານການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ມອບເຄື່ອງກິລາຈຳນວນໜຶ່ງໃຫ້ຄະນະກອງພົນທີ 2.

ກ່ອນໜ້ານີ້ໃນວັນທີ 12 ຄະນະ ຍັງໄດ້ພົບປະກັບອຳນາດການປົກຄອງເມືອງ ແລະ ບັນດາອົງການ, ຫ້ອງການ ແລະ ອຳນາດການປົກຄອງບ້ານອ້ອມຂ້າງເມືອງໄຊສະຖານ ເພື່ອພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ໂອກາດດັ່ງກ່າວ ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບສະພາບທີ່ຕັ້ງ ແລະ ຈຸດພິເສດ ຈາກທ່ານ ບຸນແປດ ໄຊໂຄງ ຮອງນາຍບ້ານ ບ້ານກິ່ວກອກ ວ່າ: ບ້ານກິ່ວກອກເປັນບ້ານໜຶ່ງໃນຈຳນວນ 21 ບ້ານທີ່ຂຶ້ນກັບເມືອງໄຊສະຖານ ຕັ້ງຢູ່ທິດຕາເວັນຕົກຂອງເມືອງ, ຫ່າງຈາກຕົວເມືອງ 36 ກິໂລແມັດ ທິດຕາເວັນອອກຕິດກັບບ້ານສະເຂດ, ທິດເໜືອຕິດກັບບ້ານສະປີ, ທິດໃຕ້ຕິດກັບບ້ານສະກຽງ, ທິດຕາເວັນຕົກຕິດກັບບ້ານປຽງຊໍ້ ອຳເພີສະເຫລີມພະກຽດປະເທດໄທ ມີເນື້ອທີ 2.080,11 ເຮັກຕາ, ມີພົນລະເມືອງທັງໝົດ 298 ຄົນ ຍິງ 148 ຄົນ, ມີ 61 ຄອບຄົວ, 4 ໜ່ວຍຄຸ້ມຄອງຈຳນວນພົນ 100% ແມ່ນຊົນເຜົ່າໄປ ອາຊີບຕົ້ນຕໍເຮັດໄຮ່ປູກເຂົ້າ, ປູກຝັງ ແລະ ລ້ຽງສັດ ປັດຈຸບັນຄອບຄົວທຸກຍາກຍັງ 10 ຄອບຄົວ ພ້ອມນັ້ນ, ຮອງນາຍບ້ານຍັງໄດ້ຕາງໜ້າໃຫ້ພໍ່ແມ່ປະຊາຊົນສະເໜີນຳ ຄະນະ ເປັນຕົ້ນແມ່ນຂໍສະເໜີຍົກລະດັບເສັ້ນທາງໃຫ້ສະດວກ ແລະ ທາງເຂົ້າບ້ານ, ສະເໜີຂໍສາຍຢາງຂະຫຍາຍນ້ຳລິນໃຫ້ຄອບຄົວທີ່ຢູ່ຫ່າງໄກຈາກຈຸດນ້ຳລິນ, ໃຫ້ຄວບຄຸມລາຄາໝາກເດືອຍແລະລາຄາເຜືອກ, ສະເໜີຂໍສັງກະສີມຸງຫລັງຄາສະໂມສອນບ້ານຫລັງໃໝ່ ພ້ອມທັງມອບເຄື່ອງຊ່ວຍເຫລືອຈຳນວນໜຶ່ງ ໃຫ້ແກ່ອຳນາດການປົກຄອງໄປແຈກຢາຍໃຫ້ຄອບຄົວທຸກຍາກພາຍໃນບ້ານກິ່ວກອກ ແລະ ໄດ້ມອບເງິນສົດຈຳນວນ 8 ລ້ານກວ່າກີບໃຫ້ອຳນາດການປົກຄອງເມືອງ ເພື່ອນຳໄປຊື້ສັງກະສີມອບໃຫ້ແກ່ບ້ານກິ່ວກອກ. ໂອກາດດັ່ງກ່າວ, ທ່ານຮອງປະທານ ສພຊ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ມູນເຊື້ອດຸໝັ່ນຂະຫຍັນພຽນຂອງພໍ່ແມ່ປະຊາຊົນທີ່ສາມາດເຮັດການຜະລິດກຸ້ມຢູ່ກຸ້ມກິນ ພ້ອມທັງໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ໄດ້ພິຈາລະນາຮັບຮອງເອົາຫລາຍບັນຫາສຳຄັນທີ່ເປັນພື້ນຖານຂອງຊາດ ແລະ ຂອງທ້ອງຖິ່ນ ເປັນຕົ້ນແມ່ນການສ້າງ ແລະ ປັບປຸງກົດໝາຍ ແລະ ອື່ນໆ. ໃນຕອນເຊົ້າຂອງວັນທີ 14 ກຸມພາ ຄະນະ ຍັງໄດ້ພົບປະກັບອ້າຍນ້ອງນາຍ ແລະ ພົນຕຳຫລວດ ຢູ່ສະໂມສອນກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ໄດ້ມອບຄອມພິວເຕີ 1 ຊຸດ ແລະ ອຸປະກອນກິລາຈຳນວນໜຶ່ງ ແລະ ນອກຈາກນີ້ ຄະນະສະມາຊິກສະພາແຫ່ງຊາດ ຍັງໄດ້ລົງພົບປະຜູ້ມີສິດເລືອກຕັ້ງບັນດາພະແນກການອ້ອມຂ້າງແຂວງຢູ່ຫ້ອງປະຊຸມໃຫຍ່ຂອງແຂວງ, ພົບປະກັບປະຊາຊົນຢູ່ບ້ານປາກຮຸ່ງເມືອງ ແຂວງໄຊຍະບູລີ ແລະ ຈຸດອື່ນໆ.

(ສອນສັກ ວັນວິໄຊ)

## ສພຂ...



ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານ ສພຂ, ເຂົ້າຮ່ວມມີທ່ານ ວັນໄຊ ແພງຊຸມມາ ເຈົ້າແຂວງໆຫົວພັນ, ມີສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ການນຳຂອງແຂວງ, ຫົວໜ້າພະແນກການ, ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການກວດສອບປະຈຳພາກເໜືອ ພ້ອມດ້ວຍແຂກຖືກເຊີນ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນກ່າວອັດກອງປະຊຸມວ່າ: ຕະຫລອດການດຳເນີນກອງປະຊຸມ ບັນດາທ່ານ ສສຊ ແລະ ສສຂ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າທົ່ວແຂວງ, ໄດ້ສຸມສະຕິປັນຍາ ແລະ ເສີມຂະຫຍາຍສິດປະຊາທິປະໄຕຂອງຕົນ ເຂົ້າໃນການຄົ້ນຄວ້າປະກອບຄຳເຫັນຕໍ່ເນື້ອໃນກອງປະຊຸມຢ່າງຮອບດ້ານ, ກົງໄປກົງມາ ເລິກເຊິ່ງ ຖີ່ຖ້ວນ ແລະ ມີຄວາມຮັບຜິດຊອບສູງ. ກອງປະຊຸມໄດ້ຕີລາຄາສູງຕໍ່ອົງການປົກຄອງແຂວງ, ຂະແໜງການຕ່າງໆ ທີ່ໄດ້ຕັ້ງໜ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ໃນໄລຍະ 1 ປີຜ່ານມາ, ກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນຄື: ຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳປີ 2021 ແລະ ທິດທາງແຜນການປີ 2022 ຂອງແຂວງຫົວພັນ ຕາມການສະເໜີຂອງອົງການປົກຄອງແຂວງ; ຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານຂອງອົງການກວດສອບປະຈຳພາກເໜືອ ປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022, ບົດລາຍງານຜົນການກວດສອບ ບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງຫົວພັນ ປີ 2020 ແລະ ເອກະສານລາຍງານການເງິນ ຂອງລັດວິສາຫະກິດນ້ຳປະປາ ແຂວງຫົວພັນ ປະຈຳປີ 2020; ຮັບຮອງເອົາບົດລາຍງານຂອງອົງການກວດກາລັດ ກ່ຽວກັບການກວດກາຕາມຜົນຂອງການກວດສອບ ຂອງແຂວງຫົວພັນ; ຮັບຮອງເອົາການຈັດຕັ້ງປະຕິບັດວຽກງານປີ 2021 ແລະ ທິດທາງແຜນການປະຈຳປີ 2022 ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງ ແລະ ພິຈາລະນາ ຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ຂອງ ສພຂ ປະຈຳປີ 2021 ແລະ ທິດທາງແຜນການປີ 2022.

ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ແມ່ນໝາກຜົນລວມຍອດ ແຫ່ງການເສີມຂະຫຍາຍສະຕິປັນຍາລວມໝູ່, ການປະສານສົມທົບກົມກຽວລະຫວ່າງ ສພຂ ກັບອົງການປົກຄອງແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ແລະ ມີຜົນສຳເລັດຢ່າງຈົບງາມ.

(ເວີນທອງ ແກ້ວບຸນມີ)

## ກອງປະຊຸມ...



ຄຳຟອງ ອິນມະນີ ປະທານ ສພຂ, ເຂົ້າຮ່ວມມີທ່ານ ຄຳໄຫລ ສີປະເສີດ ເຈົ້າແຂວງໆຫລວງນ້ຳທາ, ມີທ່ານ ພົຕ. ວົງສັກ ພົນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີຕາງໜ້າອົງການກວດສອບປະຈຳພາກເໜືອ, ອົງການແນວລາວສ້າງຊາດແຂວງ, ບັນດາການນຳພັກ-ລັດແຂວງ, ບັນດາສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ບັນດາສະມາຊິກສະພາປະຊາຊົນແຂວງ (ສສຂ), ອະດີດການນຳຂອງແຂວງ, ອະດີດ ສສຊ ປະຈຳເຂດເລືອກຕັ້ງ, ບັນດາທ່ານນັກປະຕິວັດອາວຸໂສ, ຜູ້ຊົງຄຸນວຸດທິ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, 2 ກອງບັນຊາການຂອງແຂວງ, ພະແນກການ, ອົງການທຽບເທົ່າ ແລະ ບັນດາແຂກຖືກເຊີນ ລວມທັງໝົດ 150 ກວ່າທ່ານ.

ກອງປະຊຸມຄັ້ງນີ້ ໄດ້ສຸມໃສ່ພິຈາລະນາ, ຮັບຮອງບັນດາເນື້ອໃນທີ່ສຳຄັນຂອງແຂວງ ຄື: ຮັບຟັງການລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງຄະນະປະຈຳ ສພຂ ໃນລະຫວ່າງສອງກອງປະຊຸມ; ພິຈາລະນາ, ຮັບຮອງເອົາບົດລາຍງານ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງແຂວງ; ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການກວດສອບປະຈຳພາກເໜືອ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2021, ແຜນການ ປະຈຳປີ 2022 ແລະ ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວງົບປະມານແຫ່ງລັດ, ເອກະສານລາຍງານການເງິນ ລັດວິສາຫະກິດນ້ຳປະປາ ປະຈຳປີ 2020 ຂອງແຂວງຫລວງນ້ຳທາ; ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2021, ແຜນການ ປະຈຳປີ 2022 ແລະ ຜົນການຕິດຕາມກວດກາ ຕາມຜົນຂອງການກວດສອບ; ພິຈາລະນາ, ຮັບຮອງເອົາ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນສັງຄົມສົງເຄາະ ແຂວງຫລວງນ້ຳທາ; ພິຈາລະນາ, ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ; ພິຈາລະນາ, ຮັບຮອງເອົາບົດລາຍງານ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022 ຂອງຄະນະປະຈຳສະພາປະຊາຊົນແຂວງ; ຮັບຟັງການລາຍງານກ່ຽວກັບການປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ພາຍໃນແຂວງຫລວງນ້ຳທາ; ພ້ອມດຽວກັນ ຜູ້ແທນກອງປະຊຸມ ໄດ້ສຸມສະຕິປັນຍາ ໃນການຄົ້ນຄວ້າ, ປະກອບຄຳເຫັນຕໍ່ບົດລາຍງານຕ່າງໆ ແລະ ບັນຫາທີ່ພົບຄວາມຫຍຸ້ງຍາກພາຍໃນແຂວງ, ເມືອງ ເພື່ອໃຫ້ໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນກວ່າເກົ່າ; ນອກນັ້ນ, ບັນດາທ່ານ ສສຊ ແລະ ສສຂ ຍັງໄດ້ລົງຄະແນນສຽງຮັບຮອງເອົາບັນຫາສຳຄັນຂອງແຂວງ ດ້ວຍຄະແນນສຽງສ່ວນຫລາຍ.

ໂອກາດດັ່ງກ່າວ, ທ່ານ ຄຳຟອງ ອິນມະນີ ໄດ້ມີຄຳເຫັນໂອ້ລົມ ແລະ ສະແດງຄວາມຊົມເຊີຍມາຍັງອົງການລັດທີ່ກ່ຽວຂ້ອງ ທີ່ໃຫ້ການຮ່ວມມື ຊີ້ແຈງອະທິບາຍ ຕໍ່ເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ແລະ ຊົມເຊີຍບັນດາທ່ານ ສສຂ ທີ່ມີຄວາມຮັບຜິດຊອບສູງ, ສຸມສະຕິປັນຍາ ໃນການຄົ້ນຄວ້າ, ປະກອບຄຳເຫັນຢ່າງເລິກເຊິ່ງ ແລະ ມີຈຸດສຸມ ເຂົ້າໃນແຕ່ລະເນື້ອໃນ ກອງປະຊຸມຄັ້ງນີ້ ໃຫ້ສຳເລັດ, ບັນລຸຕາມແຜນການທີ່ວາງໄວ້.

(ວັນນີ ແຝງບົວວັນ)

## ພົບປະ...

ໂອກາດດຽວກັນນີ້, ຄະນະ ຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມ ມອບໃຫ້ຄອບຄົວທຸກຍາກຢູ່ບ້ານກໍໄຮ ແລະ ມອບກາເຟສຳເລັດຮູບ ໃຫ້ນາຍ ແລະ ພົນທະຫານ ຢູ່ກອງຮ້ອຍ 18 ປະຈຳຜາຖີ່ ລວມມູນຄ່າທັງໝົດ 15 ກວ່າກີບ.

(ນາງ ປຸ້ຍນິຕາ ເພັງມີໄຊ)

# ຮອງປະທານ ສປນວ ລົງຊຸກຍູ້ ການເຄື່ອນໄຫວວຽກງານຂອງ ສສຂ



(ສພຊ) ທ່ານ ນາງ ລຳພອຍ ສີອັກຄະຈັນ ຮອງປະທານສະພາປະຊາຊົນນະຄອນຫລວງວຽງຈັນ (ສປນວ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ ຕາມມະຕິຂອງຄະນະປະຈຳສະພາປະຊາຊົນນະຄອນຫລວງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະສະມາຊິກສະພາປະຊາຊົນນະຄອນຫລວງ ປະຈຳເຂດເລືອກຕັ້ງເມືອງ 9 ເມືອງ ນວ ເຊິ່ງຈະໄດ້ເຄື່ອນໄຫວໃນລະຫວ່າງວັນທີ 16-25 ກຸມພາ 2022 ນີ້.

ໃນວັນທີ 16 ກຸມພາ 2022 ຄະນະດັ່ງກ່າວ ໄດ້ເຄື່ອນໄຫວຢູ່ເມືອງໄຊເສດຖາ ໂດຍການຕ້ອນຮັບຂອງທ່ານ ບຸນປິງ ປັນຍາຈິດ ຮອງເຈົ້າເມືອງເມືອງໄຊເສດຖາ, ຫົວໜ້າຄະນະສະມາຊິກສະພາປະຊາຊົນນະຄອນຫລວງ ປະຈຳເຂດເລືອກຕັ້ງເມືອງໄຊເສດຖາ; ມີທ່ານເລຂາທິການສະພາປະຊາຊົນນະຄອນຫລວງ, ບັນດາສະມາຊິກສະພາປະຊາຊົນນະຄອນຫລວງປະຈຳເມືອງໄຊເສດຖາ ເຂົ້າຮ່ວມ.

ຈຸດປະສົງຂອງການລົງເຄື່ອນໄຫວຄັ້ງນີ້ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ ແລະ ການເຄື່ອນໄຫວຂອງຄະນະສະມາຊິກສະພາປະຊາຊົນນະຄອນຫລວງ ປະຈຳເຂດເລືອກຕັ້ງເມືອງໄຊເສດຖາ, ພ້ອມທັງເປັນການຊຸກຍູ້ກ່ຽວກັບການສ້າງຫ້ອງປະຈຳການຂອງຄະນະສະມາຊິກສະພາປະຊາຊົນນະຄອນຫລວງ ປະຈຳເຂດເລືອກຕັ້ງເມືອງໄຊເສດຖາ ແລະ ຫ້ອງປະຈຳການຂອງຄະນະຊ່ວຍວຽກ ແລະ ເພື່ອເກັບກຳບັນຫາ, ສະພາບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ.

ຄະນະດັ່ງກ່າວ ໄດ້ຮັບຟັງການລາຍງານຈາກທ່ານ ບຸນປິງ ປັນຍາຈິດ ກ່ຽວກັບສະພາບລວມໃນການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາຂອງຄະນະສະມາຊິກສະພາປະຊາຊົນນະຄອນຫລວງ ປະຈຳເຂດເລືອກຕັ້ງເມືອງໄຊເສດຖາ ໂດຍທ່ານໄດ້ໃຫ້ຮູ້ວ່າ: ໜ່ວຍສະມາຊິກສະພາປະຊາຊົນນະຄອນຫລວງ ປະຈຳເຂດເລືອກຕັ້ງທີ 3 ເມືອງໄຊເສດຖາ ປະກອບມີທັງໝົດ 4 ທ່ານ ຍິງ 1 ທ່ານ. ໃນນີ້, ເປັນຫົວໜ້າຄະນະ 1 ທ່ານ, ກຳມະການ 3 ທ່ານ ແລະ ມີກອງເລຂາຊ່ວຍວຽກ 1 ທ່ານ. ຜ່ານມາ, ໄດ້ມີການປະສານສົມທົບວຽກງານລະຫວ່າງຄະນະສະມາຊິກສະພາປະຊາຊົນ ນວ ປະຈຳເມືອງ ກັບ ປສນວ, ໄດ້ເຄື່ອນໄຫວຊຸກຍູ້ວຽກງານຢູ່ຂັ້ນຮາກຖານບ້ານ,ເປັນຕົ້ນແມ່ນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາມາດຕະການປ້ອງກັນແລະຄວບຄຸມການລະບາດຂອງພະຍາດໂຄວິດ-19. ພ້ອມດຽວກັນນີ້, ກໍໄດ້ຮັບເອົາຄຳສະເໜີ, ຄຳຮ້ອງທຸກຂອງປະຊາຊົນ ນຳສິ່ງໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂໄດ້ເປັນຢ່າງດີ.

ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ກໍໄດ້ແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ ໂດຍສະເພາະແມ່ນບັນຫາທີ່ຍັງເປັນຂໍ້ຄົງຄ້າງທີ່ຍັງບໍ່ສາມາດແກ້ໄຂໄດ້ທັນການ ເຊັ່ນ: ການແກ້ໄຂບັນຫາທີ່ດິນປະຊາຊົນ ທີ່ຖືກບາງໂຄງການພັດທະນາຂອງລັດ, ການຂັດແຍ່ງບັນຫາທີ່ດິນ, ການຊີ້ແຈງ ແລະ ແກ້ໄຂຄຳສະເໜີປະຊາຊົນຂອງພາກສ່ວນກ່ຽວຂ້ອງ ຍັງຊັກຊ້າ ແລະ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ອຸປະກອນຮັບໃຊ້ທີ່ຈຳເປັນ ໃຫ້ແກ່ການເຄື່ອນໄຫວວຽກງານ ຂອງຄະນະສະມາຊິກ ສະພາປະຊາຊົນນະຄອນຫລວງ ຍັງບໍ່ພຽງພໍກັບຄວາມຕ້ອງການ ແລະ ບັນຫາອື່ນໆອີກຈຳນວນໜຶ່ງ.




# ກອງປະຊຸມຖອດຖອນບົດຮຽນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2

(ສພຊ) ຕອນບ່າຍຂອງວັນທີ 16 ກຸມພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດກອງປະຊຸມຖອດຖອນບົດຮຽນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຜົ້ງສາລີ ຊຸດທີ II ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ ປະທານຄະນະປະຈຳສະພາປະຊາຊົນແຂວງ, ມີຕາງໜ້າຈາກຄະນະຮັບຜິດຊອບຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ຮອງເລຂາທິການ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ.



ກອງປະຊຸມ, ໄດ້ຮັບຟັງທ່ານ ຄຳມາ ສຸລິວົງ ຮອງເລຂາທິການ ສພຂ ຜ່ານບົດສະຫລຸບຕີລາຄາການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II ເຊິ່ງທ່ານກໍໄດ້ຍົກໃຫ້ເຫັນເຖິງຜົນງານດ້ານດີ, ດ້ານອ່ອນ ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້. ຈາກນັ້ນ, ກໍແລກປ່ຽນບົດຮຽນໃນການກະກຽມ ແລະ ດຳເນີນກອງປະຊຸມ ຢ່າງກົງໄປກົງມາ, ພາວະວິໄສ ເພື່ອຮັບປະກັນໃຫ້ການກະກຽມ ແລະ ດຳເນີນກອງປະຊຸມຂອງສະພາປະຊາຊົນແຂວງຄັ້ງຕໍ່ໄປມີປະສິດທິພາບສູງ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ກຳມະບານຮາກຖານ ສະພາປະຊາຊົນແຂວງຫລວງນ້ຳທາ ປາຖະກະຖາວັນສ້າງຕັ້ງກຳມະບານລາວ ຄົບຮອບ 66 ປີ

(ສພຊ) ເປັນການເຕົ້າໂຮມ, ສຶກສາອົບຮົມໃຫ້ແກ່ພະນັກງານ, ສະມາຊິກກຳມະບານໃຫ້ຮັບຮູ້, ເຂົ້າໃຈກ່ຽວກັບມູນເຊື້ອວັນກຳມະບານລາວ, ການເຕີບໃຫຍ່ຂະຫຍາຍຕົວຂອງຊົ້ນຊັ້ນກຳມະບານລາວ, ຜົນງານການປະກອບສ່ວນປົກປັກຮັກສາ ແລະ ພັດທະນາປະເທດຊາດຂອງຊົ້ນຊັ້ນກຳມະບານລາວ.

ຕອນບ່າຍຂອງວັນທີ 7 ກຸມພາ 2022 ກຳມະບານຮາກຖານ ສພຂ ຫລວງນ້ຳທາ ໄດ້ປາຖະກະຖາວັນສ້າງຕັ້ງອົງການກຳມະບານລາວ ຄົບຮອບ 66 ປີ (1 ກຸມພາ 1956-1 ກຸມພາ 2022 ) ໂດຍການເປັນປະທານຂອງທ່ານ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 3 ແຂວງຫລວງນ້ຳທາ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປະທານກຳມະບານຮາກຖານ ສພຂ; ເຂົ້າຮ່ວມມີທ່ານ ນາງ ອຸ່ນຫລ້າ ອ້ຽງລໍລາດ ກຳມະການພັກແຂວງ ເລຂາໜ່ວຍພັກສະພາປະຊາຊົນແຂວງ ຮອງປະທານສະພາປະຊາຊົນແຂວງ ແລະ ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ, ຫົວໜ້າ, ຮອງຫົວໜ້າຂະແໜງ ພ້ອມດ້ວຍສະມາຊິກກຳມະບານ ເຂົ້າຮ່ວມທັງໝົດ 34 ທ່ານ, ຍິງ 17 ທ່ານ.



ໃນພິທີ ທ່ານ ຄຳພອນ ເຕີ່ນຈະເລີນ ຮອງປະທານກຳມະບານຮາກຖານສະພາປະຊາຊົນແຂວງ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ໄດ້ຂຶ້ນປາຖະກະຖາວັນສ້າງຕັ້ງກຳມະບານ ຄົບຮອບ 66 ປີ ເຊິ່ງໃນທ້າຍສັດຕະວັດທີ 19 ພວກລ່າເມືອງຂຶ້ນຝລັ່ງເຂົ້າມາຮຸກຮານຍຶດຄອງເອົາຫວຽດນາມ ລາວ ແລະ ກຳປູເຈຍ ເປັນຫົວເມືອງຂຶ້ນ ແລ້ວສ້າງຕັ້ງສະຫະພັນອິນດູຈີນຝຣັ່ງ ສ່ວນຢູ່ປະເທດລາວພວກລ່າເມືອງຂຶ້ນຝະລັ່ງເຂົ້າມາຍຶດຄອງແຕ່ປີ 1893-1954 ພວກເຂົາໄດ້ເກັບເກນຊາວໄຮ່ນາໄປຂຸດຄົ້ນເອົາແຮ່ກົ່ວຢູ່ບໍ່ໂພນຕິ້ວ ໄປເປັນກຸລີເຮັດທາງ ຈຶ່ງເກີດມີກຳມະກອນລະດູການນັບມື້ຫລາຍຂຶ້ນ ແລະ ໄດ້ກາຍເປັນກຳມະກອນອາຊີບ ຈາກນັ້ນ ຈຳນວນກຳມະກອນລາວ ໄດ້ເພີ່ມຂຶ້ນເລື້ອຍໆ ໃຕ້ການປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງກຳມະກອນລາວຖືກກົດຂີ່, ຂູດຮີດແຮງງານຢ່າງໜັກໜ່ວງ ພວກເຂົາບັງຄັບໃຫ້ກຳມະກອນອອກແຮງງານ 14-16 ຊົ່ວໂມງຕໍ່ມື້ ອອກແຮງງານຫລາຍໃຫ້ຄ່າຕອບແທນໜ້ອຍ, ຖືກຕັດເງິນເດືອນໄລ່ອອກການໂດຍບໍ່ມີເຫດຜົນພຽງພໍ ແລະ ຖືກທຸບຕີທໍລະມານຢ່າງແສນສາຫັດຈາກພວກນາຍທຶນ, ມີຄວາມສ່ຽງອັນຕະລາຍຕໍ່ການອອກແຮງງານ ຊີວິດການເປັນຢູ່ຂອງກຳມະກອນ ແລະ ປະຊາຊົນລາວບັນດາເຜົ່າ ອຶດຢາກ ຍາກແຄ້ນ, ບໍໄດ້ຮັບຄວາມເປັນທຳ, ຂາດສິດເສລີພາບດ້ານການເມືອງ ແລະ ກົດໝາຍ, ມາເຖິງປີ 1930 ພັກຄອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍແມ່ນ ທ່ານ ປະທານ ໂຮ່ຈີ່ມິ່ງ ເປັນຜູ້ສ້າງຕັ້ງ ແລະ ນຳພາ, ພັກໄດ້ວາງແນວທາງອັນຖືກຕ້ອງເພື່ອນຳພາຂະບວນການຕໍ່ສູ້ປົດປ່ອຍຊາດຢູ່ອິນດູຈີນຕ້ານພວກລ່າເມືອງຂຶ້ນຝຣັ່ງ, ມາເຖິງວັນທີ 1/2/1956 ກົມການເມືອງສູນກາງພັກໄດ້ມີມະຕິຕົກລົງສ້າງຕັ້ງອົງການຈັດຕັ້ງກຳມະບານລາວຂຶ້ນຢ່າງເປັນທາງການຢູ່ເຂດທີ່ໝັ້ນແຂວງຫົວພັນ ໂດຍແມ່ນທ່ານ ສີສົມພອນ ລໍວັນໄຊ ເປັນຜູ້ຊີ້ນຳໂດຍມີຈຸດປະສົງ ເພື່ອສືບຕໍ່ໂຄສະນາຂົນຂວາຍເຕົ້າໂຮມກຳມະກອນຊາວຜູ້ອອກແຮງງານລາວບັນດາເຜົ່າໃຫ້ມີຄວາມຕື່ນຕົວປະຕິວັດ ມີນ້ຳໃຈຮັກຊາດ ມີທັດສະນະຊົນຊັ້ນກຳມະກອນມີຄວາມຕື່ນຕົວທາງດ້ານຊົນຊັ້ນຢ່າງຈະແຈ້ງ ເສີມຂະຫຍາຍປະຊາທິປະໄຕ ມີລະບຽບແບບແຜນ ເປັນພົນເມືອງດີຂອງຊາດ ສົ່ງເສີມການມີວຽກເຮັດງານທຳ ແລະ ເປັນຕົວແທນໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳໃຫ້ແກ່ກຳມະກອນ ຊາວຜູ້ອອກແຮງງານລາວບັນດາເຜົ່າ ກາຍເປັນກຳລັງແຮງເຂົ້າຮ່ວມຢ່າງຕັ້ງໜ້າ ແລະ ເປັນເຈົ້າການໃນການຕໍ່ສູ້ກູ້ຊາດ ປົກປັກຮັກສາ ແລະ ພັດທະນາປະເທດຊາດ ຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມຢ່າງບໍ່ຢຸດຢັ້ງ.

ພ້ອມນັ້ນ, ທ່ານ ຈັນທະສຸລິນ ໝັ້ນປະດິດ ໄດ້ຂຶ້ນເຜີຍແຜ່ມະຕິກອງປະຊຸມສາມັນຄົບຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ຄັ້ງທີ 2 ສະໄໝທີ VIII ຫລັງຈາກນັ້ນ ທ່ານ ມີໄຊ ມີວິໄລ ກຳມະການຄະນະປະຈຳສະພາປະຊາຊົນແຂວງ ເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນເຜີຍແຜ່ດຳລັດສະບັບເລກທີ184/ລບ, ລົງວັນທີ26ມິຖຸນາ 2019 ວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນ ເຊິ່ງມີທັງໝົດ 4 ໝວດ, 14 ມາດຕາ.

ໃນຕອນທ້າຍພິທີ, ໄດ້ທີການມອບໃບຍັ້ງຢືນຂໍ້ແຂ່ງຂັນກຳມະບານ 5 ເປັນເຈົ້າໂດຍການໃຫ້ກຽດມອບຂອງທ່ານ ນາງ ອຸ່ນຫລ້າ ອ້ຽງລໍລາດ ຂຶ້ນຮັບໂດຍທ່ານ ຈັນທະສຸລິນ ໝັ້ນປະດິດຍັງໄວປະທານກຳມະບານຮາກຖານສະພາປະຊາຊົນແຂວງ.

# ສພຂ ຊຽງຂວາງ ເຄື່ອນໄຫວເຜີຍແຜ່ເອກະສານສຳຄັນຂອງພັກ-ຂອງຊາດ

(ສພຊ) ໃນວັນທີ 10 ກຸມພາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຊວາງ ໄດ້ເຜີຍແຜ່ເອກະສານວັນສຳຄັນຂອງພັກ-ຂອງຊາດ ໂດຍການເຂົ້າຮ່ວມຂອງທ່ານ ບຸນໂຮມ ເທດທານີ ປະທານ ສພຂ ຊຽງຂວາງ, ມີບັນດາຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຄະນະໜ່ວຍພັກ ສພຂ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນ ສພຂ ເຂົ້າຮ່ວມ.



ໃນທີ່ປະຊຸມ, ບັນດາຄະນະປະຈຳສະພາປະຊາຊົນແຂວງ, ຄະນະໜ່ວຍພັກ ແລະ ຄະນະໜ່ວຍກຳມະບານ ສພຂ ໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ເອກະສານສຳຄັນຂອງພັກ-ຂອງຊາດ ເປັນຕົ້ນແມ່ນມູນເຊື້ອການເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງກຳມະບານລາວ ວັນທີ 1 ກຸມພາ 1956-1 ກຸມພາ 2022 ຄົບຮອບ 66 ປີ, ຜົນຂະຫຍາຍຜົນສຳເລັດຂອງການຢ້ຽມຢາມສັນຖະວະໄມຕີ ສສ.ຫວຽດນາມ ຢ່າງເປັນທາງການ ຂອງຄະນະຜູ້ແທນຂັ້ນສູງນຳໂດຍປະທານສະພາແຫ່ງຊາດລາວ ແລະ ຜົນການພົບປະທາງໄກລະຫວ່າງປະທານສະພາແຫ່ງຊາດລາວ ແລະ ປະທານສະພາສູງລັດເຊຍ, ວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວຄົບຮອບ 73 ປີ, ມູນເຊື້ອການເຕີບໃຫຍ່ຂະຫຍາຍຕົວຂອງສະຫະພັນກຳມະບານແຂວງຊຽງຂວາງ ແຕ່ປີ 1978-2022 ເພື່ອເຮັດໃຫ້ພະນັກງານ-ລັດຖະກອນສະພາປະຊາຊົນແຂວງໄດ້ຮັບຮູ້, ເຂົ້າໃຈກ່ຽວກັບ, ພາລະບົດບາດ, ສິດ, ໜ້າທີ່, ມູນເຊື້ອ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງສະຫະພັນກຳມະບານລາວ, ເປັນການປຸກລະດົມສ້າງຂະບວນການໃນການປະຕິບັດໜ້າທີ່ວິຊາສະເພາະ, ມີລະບຽບວິໄນໃນການອອກແຮງງານ ແລະ ປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າໂດຍຕິດພັນກັບຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ. ນອກຈາກນັ້ນ, ຍັງເປັນການທວນຄືນມູນເຊື້ອປະຫວັດສາດ, ວິລະກຳຕໍ່ສູ້ອັນອົງອາດກ້າແກ່ນ, ເຫັນໄດ້ຜົນງານ ແລະ ໄຊຊະນະອັນໃຫຍ່ຫລວງຂອງກອງທັບປະຊາຊົນລາວທີ່ຍາດມາໄດ້ຕະຫລອດໄລຍະ 73 ປີ, ພ້ອມກັບການເສີມຂະຫຍາຍທາດແທ້ ແລະ ມູນເຊື້ອອັນດີງາມຂອງກອງທັບປະຊາຊົນປະຕິວັດລາວເຂົ້າໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງອົງຄະນະພັກແຂວງ ກໍຄືແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX ຂອງລັດໃຫ້ປາກົດຜົນເປັນຈິງ.

ໃນທີປະຊຸມ, ທ່ານ ບຸນໂຮມ ເທດທານີ ຍັງມີຄຳເຫັນໂອ້ລົມຕໍ່ພະນັກງານ ສພຂ ໃຫ້ປະຕິບັດວຽກງານຕາມຫລັກລວມສູນປະຊາທິປະໄຕ, ມີແບບແຜນວິທີເຮັດວຽກຢ່າງຈະແຈ້ງ, ເອົາໃຈໃສ່ຊອກຫາຄວາມຮູ້ເພື່ອມາພັດທະນາຕົນເອງ, ຮັກສາມູນເຊື້ອຄວາມສາມັກຄີຊ່ວຍເຫລືອເຊິ່ງກັນແລະກັນພາຍໃນໃຫ້ແໜ້ນແຟ້ນ.

(ນາງ ສຸກສະຫວັນ ອິນທະແສງ)






# ຮອງປະທານ ສພຂ ອຸດົມໄຊ ສຳເລັດການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ທີ່ເມືອງນາໝໍ້ ແລະ ເມືອງງາ

(ສພຊ) ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາປະຊາຊົນແຂວງ (ສສຂ) ໃນນາມທີ່ເປັນຕົວແທນຂອງປະຊາຊົນລາວບັນດາເຜົ່າ ເພື່ອລົງພົບປະໂອ້ລົມ, ໂຄສະນາ, ຜັນຂະຍາຍ ແລະ ເຜີຍແຜ່ບັນດາເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ II ຕໍ່ຜູ້ມີສິດເລືອກຕັ້ງໄດ້ເຊື່ອມຊຶມ, ຮັບຮູ້ ແລະ ເຂົ້າໃຈບັນຫາສຳຄັນຕ່າງໆ.



ໃນລະຫວ່າງວັນທີ 8-11 ກຸມພາ 2022, ທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ແລະ ທ່ານ ພັດ ເພັດສະຫວັນ ໄຊອຸ່ນຄຳ ສສຂ ປະຈຳເມືອງນາໝໍ້, ຮອງຫົວໜ້າກອງບັນຊາການ ປກສ ເມືອງນາໝໍ້ ແຂວງອຸດົມໄຊ ໄດ້ເຄື່ອນໄຫວເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ທີ່ເມືອງນາໝໍ້ ແຂວງອຸດົມໄຊ.

ການເຜີຍແຜ່ໃນຄັ້ງນີ້ ລວມມີ 8 ຈຸດ (8 ບ້ານ) ຈຸດຄື: ບ້ານພູເອືອດ, ບ້ານພູອົມ, ບ້ານນ້ຳຕອງ, ບ້ານວັງອາງ, ບ້ານຫ້ວຍຮາ, ບ້ານຫ້ວຍປອດ, ບ້ານແພງ ແລະ ບ້ານຫ້ວຍຮູ, ມີພົນລະເມືອງເຂົ້າຮ່ວມຮັບຟັງທັງໝົດ 563 ຄົນ ຍິງ 183 ຄົນ.

ເອກະສານໃນການເຜີຍແຜ່ໃນຄັ້ງນີ້ ມີບັນດາມະຕິທີ່ໄດ້ຮັບຮອງເອົາໃນວາລະ 2 ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II. ພ້ອມນີ້, ຍັງໄດ້ຮັບຟັງຄຳຄິດຄຳເຫັນ ແລະ ຄຳສະເໜີຈາກຜູ້ມີສິດເລືອກຕັ້ງ ຄຳສະເໜີດັ່ງກ່າວສ່ວນຫລາຍແມ່ນວຽກງານການພັດທະນາພື້ນຖານໂຄງລ່າງ ເປັນຕົ້ນແມ່ນການປັບປຸງຍົກລະດັບເສັ້ນທາງເຂົ້າເຖິງແຕ່ລະບ້ານ, ຂົວຂ້າມນ້ຳ, ທຶນປຸກສ້າງອາຄານຮຽນ-ໂຮງໝໍນ້ອຍ, ການກໍ່ສ້າງ ແລະ ບັບປຸງລະບົບນ້ຳລິນ-ນ້ຳສະອາດ, ການຂະຫຍາຍຕາຄ່າຍໄຟຟ້າເຂົ້າເຖິງບ້ານ, ທຶນການປູກ-ການລ້ຽງ ແລະ ບັນຫາຜົນກະທົບຈາກໂຄງການ ແລະ ບໍລິສັດຈຳນວນໜຶ່ງ.

ໃນໂອກາດດັ່ງກ່າວ, ສສຂ ກໍໄດ້ຊີ້ແຈງບາງບັນຫາຕໍ່ພົນລະເມືອງທີ່ໄດ້ສະເໜີ ແລະ ໄດ້ນຳເອົາຄຳສະເໜີດັ່ງກ່າວເພື່ອໄປຄົ້ນຄວ້າພິຈາລະນາ, ນຳສິ່ງຕໍ່ໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂຕາມພາລະບົດ, ສິດ ແລະ ໜ້າທີ່ຂອງຕົນ ພ້ອມດຽວກັນນັ້ນ, ຮອງປະທານ ສພຂ ຍັງໄດ້ມີຄຳເຫັນໂອ້ລົມຕໍ່ພໍ່ແມ່ປະຊາຊົນທ່ານ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ອຳນາດການປົກຄອງແຕ່ລະບ້ານ ທີ່ໄດ້ຈັດຕັ້ງປະຕິບັດໜ້າທີ່ຄວາມຮັບຜິດຊອບຂອງຕົນຕະຫລອດໄລຍະຜ່ານມາ ແລະ ຍັງໄດ້ເນັ້ນໜັກບາງບັນຫາເຊັ່ນ: ເພີ່ມທະວີຄວາມສາມັກຄີເປັນຈິດໜຶ່ງໃຈດຽວ, ເປັນເຈົ້າໃນການປະສານວຽກງານ ປກຊ-ປກສ ໃຫ້ກົມກຽວກັນ, ສ້າງເສດຖະກິດຄອບຄົວ; ການປູກ-ການລ້ຽງ ເພື່ອເປັນສິນຄ້າ ເຮັດໃຫ້ຊີວິດການເປັນຢູ່ໃຫ້ດີຂຶ້ນໄປກ້າວໆ ແລະ ສືບຕໍ່ປະຕິບັດມາດຕະການປ້ອງການແຜ່ລະພະຍາດໂຄວິດ-19 ແລະ ພະຍາດອື່ນໆ.

ໃນໄລຍະດຽວກັນ, ວັນທີ 8-10 ກຸມພາ 2022 ທ່ານ ສອນວິໄລ ຕຸລາທອງ ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4, ທ່ານ ບຸນທີ ໄຊຍະວົງ ແລະ ທ່ານ ດຣ ນາງ ສິດທິວອນ ທົງສາຄອນ ສສຂ ປະຈຳເຂດເລືອກຕັ້ງເມືອງງາ ໄດ້ສຳເລັດການເຄື່ອນໄຫວເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ຢູ່ຈຸດສະໂມສອນຂອງເມືອງ, ບ້ານພູກໍ່, ບ້ານມົກລອຍ, ບ້ານພູສູງນ້ອຍ, ບ້ານຄອນທອຍ ແລະ ບ້ານແກ່ວ ລວມທັງໝົດໄດ້ 6 ຈຸດ, ມີພະນັກງານຫລັກແຫລ່ງຂັ້ນເມືອງ, ມີນາຍບ້ານ, ອົງການຈັດຕັ້ງບ້ານ ແລະ ພໍ່ແມ່ປະຊາຊົນພາຍໃນບ້ານເຂົ້າຮ່ວມທັງໝົດ 619 ຄົນ ຍິງ 331 ຄົນ.

ການເຄື່ອນໄຫວໃນຄັ້ງນີ້ ແມ່ນເພື່ອພົບປະໂອ້ລົມພໍ່ແມ່ປະຊາຊົນ ແລະ ນຳເອົາເນື້ອໃນຈິດໃຈທີ່ໄດ້ນຳເຂົ້າຜ່ານໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II, ທີ່ອອກເປັນມະຕິຂອງກອງປະຊຸມ ແລະ ບົດສັງລວມຫຍໍ້ເນື້ອໃນດັ່ງກ່າວ ເປັນຕົ້ນແມ່ນມະຕິກອງປະຊຸມ ສພຊ ແລະ ສພຂ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ, ຂອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022; ມະຕິກອງປະຊຸມ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາພະລັງງານໄຟຟ້າຂອງ ສປປລາວ (2021-2030) ແລະ ແຜນພັດທະນາພະລັງງານໄຟຟ້າ ແລະ ບໍ່ແຮ່ 5 ປີ (2021-2025); ມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ຂອງແຂວງກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022; ມະຕິກອງປະຊຸມ ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງຄະນະປະຈຳ ສພຊ, ສພຂ ກ່ຽວກັບການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ແລະ ບັນຫາອື່ນໆ.

ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ມີບາງຄຳຄິດເຫັນ ແລະ ຄຳສະເໜີຕໍ່ ສສຊ ແລະ ສສຂ ໃນການຄຸ້ມຄອງບໍລິຫານລັດຂັ້ນຕ່າງໆ, ການພັດທະນາພື້ນຖານໂຄງລ່າງ ເຊິ່ງບາງບັນຫາ ສສຊ ແລະ ສສຂ ໄດ້ມີຄຳເຫັນກະຈ່າງແຈ້ງໃຫ້ປະຊາຊົນໄດ້ຮັບຮູ້ເຂົ້າໃຈ ແລະ ບາງບັນຫາທີ່ມີຄຳເຫັນກະຈ່າງແຈ້ງບໍ່ໄດ້ແມ່ນຈະນຳມາປຶກສາຫາລືກັບພະແນກການ, ອົງການກ່ຽວຂ້ອງແກ້ໄຂໃນຂັ້ນຕອນຕໍ່ໄປ.

ໂອກາດດຽວກັນນີ້, ທີມງານຍັງໄດ້ນຳເອົາຢາສາມັນປະຈຳບ້ານທີ່ຈຳເປັນ ເຊັ່ນ: ຢາແກ້ປວດ, ຢາແກ້ແພ້, ຢາດີຫວັດ, ຢາດີຖອກທ້ອງ, ຢາດີກະເພາະ ແລະ ອື່ນໆ ອີກຈຳນວນໜຶ່ງມອບໃຫ້ປະຊາຊົນຕື່ມອີກ.

(ສີແຫວງ ສີບຸນເຮືອງ ແລະ ແສງພອນ ອິນນະລົງ)



108 ສາລະ

# ພາສາບອກຊາດ ມາລະຍາດບອກຕະກຸນ

**ໂດຍ: ດອກຫຍ້າ**

ຊາດລາວເປັນຊາດໜຶ່ງໃນອາຊີອາຄະເນທີ່ມີປະຫວັດສາດອັນຮຸ່ງເຮືອງ ແລະ ມີອະລິຍະທຳອັນສູງສົ່ງມາແຕ່ບູຮານນະການ; ມໍລະດົກວັດທະນະທຳທາງພາສາ, ວັນນະຄະດີ, ສິລະປະ, ດົນຕີ, ປະຕິມະກຳ, ສະຖາປັດຕະຍາກຳ, ຫັດຖະກຳ ແລະອື່ນໆ ທີ່ປະກອບສ້າງຄຸນຄ່າທາງດ້ານວັດຖຸ ແລະ ຈິດໃຈ ໂດຍໄດ້ຮັບການປົກປັກຮັກສາ ແລະ ສືບຕໍ່ພັດທະນາໃຫ້ຍືນຍົງຢູ່ຄູ່ກັບຊາດລາວທຸກຍຸກທຸກສະໄໝ.

ມໍລະດົກທີ່ບັນພະບູລຸດເຮົາໄດ້ສ້າງສົມ ແລະ ຕົກທອດມາໃຫ້ຄົນລາວໄດ້ສືບສານ, ຊົມໃຊ້ ໂດຍຜ່ານໜັງສືຄຳພີໃບລານຫລາຍໝື່ນຫລາຍແສນຜູກໄດ້ເປັນສັກຂີພິຍານສະແດງເຖິງຫລັກຖານ ແຫ່ງວິວັດທະນາການທາງດ້ານພາສາ ແລະ ວັນນະຄະດີລາວຢ່າງຊັດເຈນ ເຊິ່ງເປັນແຫລ່ງຂໍ້ມູນທາງວິຊາການໃຫ້ແກ່ການຄົ້ນຄວ້າ ເພື່ອຊອກຫາຮ່ອງຮອຍລາຍລັກອັກສອນ ແລະ ພູມປັນຍາອັນຍອດຍິ່ງຂອງນັກປາດອາຈານລາວຜູ້ດີເດັ່ນໃນອະດີດອັນຍາວໄກ; ພາສາປາກເວົ້າ, ການຂີດຂຽນທີ່ອ່ອນຫວານນິ້ມນວນ, ເລິກເຊິ່ງ, ມ່ວນອອນຊອນ ແລະ ອຸດົມຮັ່ງມີຂອງວັນນະຄະດີເລື່ອງຕ່າງໆ ໄດ້ເປັນອູ່ອະລິຍະທຳອັນລ້ຳຄ່າໃຫ້ແກ່ພາສາລາວ.

ຄົນລາວແຕ່ລະຍຸກແຕ່ລະສະໄໝໄດ້ມີຄວາມສະຫງວນຮັກຖະໜອມແພງ ແລະ ຕັ້ງໜ້າສືບທອດມໍລະດົກທາງປັນຍາ, ຄຸນຄ່າທາງສິລະປະ, ສີໄມ້ລາຍມື, ຄຸນງາມຄວາມດີ, ມູນເຊື້ອວິລະກຳ ແລະ ມໍລະດົກພາສາຂອງຊາດ ທີ່ບັນພະບູລຸດໄດ້ອຸທິດມອບໝາຍໄວ້ໃຫ້ ສືບຕໍ່ກັນມາຢ່າງບໍ່ຂາດສາຍ ໂດຍສະເພາະວັດທະນະທຳທາງພາສາຂອງຊາດລາວເຮົາ.

ດັ່ງນັ້ນ, ເຮົາມາຮ່ວມກັນຄິດ, ຮ່ວມປະດິດສ້າງ, ຮ່ວມສາຍທາງສາມັກຄີແຫ່ງການຮັກພາສາລາວ, ໃຊ້ພາສາລາວ, ປົກປັກຮັກສາ, ຟື້ນຟູສົ່ງເສີມ ແລະ ພັດທະນາພາສາຂອງຊາດເຮົາ ໃຫ້ຈະເລີນຮຸ່ງເຮືອງ ໄວ້ດ້ວຍກຽດສັກສີຂອງຄົນລາວຍຸກໃໝ່ ເພື່ອໃຫ້ປະຫວັດສາດໄດ້ຈາລຶກໄວ້ວ່າ "ເຮົາເກີດມາເພື່ອພັດທະນາ ແລະ ສົ່ງເສີມຄຸນຄ່າວັດທະນະທຳ ແລະ ຄວາມກ້າວໜ້າຂອງສັງຄົມ" ດັ່ງທ່ານ ພູມີ ວົງວິຈິດ ໄດ້ຂຽນໄວ້ໃນບົດນຳປຶ້ມໄວຍາກອນລາວຂອງທ່ານຕອນໜຶ່ງວ່າ "ການປົກປັກຮັກສາ ແລະ ຟື້ນຟູຕົວໜັງສື, ຄຳເວົ້າ, ວັນນະຄະດີ ແລະ ຫລັກວັດທະນະທຳຂອງຊາດ ມັນສະແດງເຖິງນ້ຳໃຈຮັກຊາດອັນເປັນມໍລະດົກ ແລະ ມູນເຊື້ອອັນປະເສີດ ແຫ່ງຄວາມພິລະອາດຫານທີ່ພໍ່ແມ່ປູ່ຍ່າຕານາຍ ໄດ້ຖ່າຍທອດມາໃຫ້ແກ່ພວກເຮົາ"



ສຸຂະພາບທາຍໂຣຄ

# ປະເພດອາຫານຊະນິດໃດ ທີ່ແມ່ຍິງຖືພາຄວນຫຼີກເວັ້ນ?





**ຖ້າທ່ານກຳລັງຖືພາ, ທ່ານຈຳເປັນຕ້ອງເອົາໃຈໃສ່ເຖິງລະບົບການກິນດື່ມຂອງສອງຄົນ ບໍ່ແມ່ນຂອງຄົນດຽວ. ປະເພດອາຫານທີ່ທ່ານກິນຈະສົ່ງຜົນສະທ້ອນເຖິງຕົວທ່ານ ແລະລູກໃນທ້ອງໃນໄລຍະຖືພາ; ຂ້າງລຸ່ມນີ້ແມ່ນບາງປະເພດອາຫານທີ່ທ່ານຄວນຫຼີກເວັ້ນເມື່ອຖືພາ:**

**ໄຂ່ດິບ ຫຼືໄຂ່ຍັງສຸກດິບ**

ເມື່ອທ່ານກຳລັງຖືພາ, ຖ້າທ່ານຢາກກິນໄຂ່ ແມ່ນຕ້ອງໃຫ້ໝັ້ນໃຈວ່າ ໄຂ່ໄດ້ຖືກປຸງແຕ່ງໃຫ້ສຸກດີແລ້ວ. ເຫດຜົນຍ້ອນໃນໄຂ່ດິບສາມາດບັນຈຸແບັກທີເຣຍ Salmonella ແບັກທີເຣຍນີ້ຈະກໍ່ໃຫ້ເກີດຄວາມຮູ້ສຶກອາປັ້ນ, ປວດຮາກ, ກຸອກທ້ອງ ແລະເປັນໄຂ້ ຫຼືໃນກໍລະນີພົບເຫັນໄດ້ຍາກແມ່ນອາດຈະລຸລູກ.

**ອາຫານບັນຈຸໃນກົ່ງສຳເລັດຮູບ**

ທ່ານເຄີຍຮູ້ກ່ຽວກັບບັນດາປະເພດແບັກທີເຣຍທີ່ມີຊື່ເອີ້ນວ່າ Listeria? ຖ້າຍັງແມ່ນທ່ານຄວນຮູ້ວ່າມັນກໍ່ໃຫ້ເກີດພະຍາດຊື່ວ່າ Listeriosis ຕໍ່ກັບແມ່ຍິງຖືພາ ມັນສາມາດກໍ່ໃຫ້ເກີດບັນດາອາການຄ້າຍໄຂ້ຫວັດໃຫຍ່.

ແຕ່ຖ້າ Listeria ຖືກສົ່ງໄປຫາເດັກໃນທ້ອງ, ມັນສາມາດເຮັດໃຫ້ລຸລູກ ຫຼືເກີດກ່ອນກຳນົດ ສະນັ້ນ, ຄວນຫຼີກເວັ້ນການຮັບປະທານອາຫານປະເພດເນູ້ສະຫຼູດບັນຈຸກ່ອງສຳເລັດຮູບ, ເຂົ້າຈີ່ ແລະ ອາຫານເຫຼືອທີ່ໄດ້ກະກຽມໄວ້ກ່ອນ.

**ຊີ້ນທີ່ຍັງປຸງແຕ່ງບໍ່ທັນສຸກ ຫຼືດິບ**

ແມ່ນໜຶ່ງໃນບັນດາປະເພດອາຫານທີ່ແມ່ຍິງຖືພາຄວນຫຼີກເວັ້ນ, ຄຽງຄູ່ກັບຄວາມສາມາດບັນຈຸແບັກທີເຣຍ Salmonella ບັນດາປະເພດອາຫານນີ້ກໍສາມາດກໍ່ໃຫ້ເກີດ Toxomoplasis. ໃນເວລາຖືພາ Toxomoplasis ສາມາດກໍ່ໃຫ້ເກີດຄວາມເສຍຫາຍໃຫ້ສະໝອງເດັກຢູ່ໃນທ້ອງ.

**ຫຼີກເວັ້ນປະເພດປາຈຳນວນໜຶ່ງ**

ປາແມ່ນສ່ວນປະກອບໜຶ່ງທີ່ຂາດບໍ່ໄດ້ຂອງລະບົບການກິນເພື່ອສຸຂະພາບ, ໃນນັ້ນມີແມ່ຍິງຖືພາ ແຕ່ວ່າ, ບາງປະເພດປາ ຄື: ປາດຸກ, ປາດາບ... ທີ່ຮູ້ກັນດີວ່າມີປະລິມານບາຫຼອດສູງ ແລະແມ່ຍິງຖືພາຄວນຫຼີກເວັ້ນ; ປະລິມານບາຫຼອດສູງໃນບັນດາປະເພດປານີ້ ສາມາດກົດໜ່ວງການພັດທະນາຂອງເດັກໃນທ້ອງ.

**ເນີຍອ່ອນ**

ກໍຍືນຢູ່ອັນດັບຕົ້ນຂອງລາຍຊື່ບັນດາປະເພດອາຫານທີ່ແມ່ຍິງຖືພາຄວນຫຼີກເວັ້ນ ແຕ່ສາມາດນຳໃຊ້ເນີຍທີ່ຖືກປຸງແຕ່ງໃຫ້ສຸກດີແລ້ວ ແລະຢ່າລືມກິນມັນໃນເວລາຍັງຮ້ອນຢູ່.

**ຂໍ້ມູນຈາກ: eva.vn**

ສາລາກະວີ

# "ຜູ້ແທນປະຊາຊົນ"

(ໂອກາດ ທ່ານ ນາງ ສູນທອນ ໄຊຍະຈັກ
ຮອງປະທານ ສພຊ ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ)

**# ໂດຍ: ກົງໃຈ ແສງອຳພັນ**

❖ ຮອງປະທານຍ່ອງຢ້ຽມ     ຢາມເຂດແຂວງສະຫວັນ
ດັ້ນດຸ່ງເຢືອນປວງຊົນ     ຖິ່ນຄົນລືລ້ຳ
ຄຳມ່ວນແດນດັ່ງດ້ານ     ອາຫານຂອງຝາກ
ຈາກນັ້ນເຢືອນເຂດແຄວ້ນ     ບໍລິຄຳໄຊເບື້ອງບ່ອນໝາຍ

❖ ຫຼາຍປະສົງມາດມຸ້ງ     ເດີນດຸ່ງຢາມປະຊາ
ໂຄສະນາຜົນສຳເລັດ     ວຽກກອງປະຊຸມພ້ອມ
ທັງຕິດຕາມມະຕິຄັ້ງ     ທີ XI ຂອງພັກ
ຜັນຂະຫຍາຍເຊື່ອມຮູ້     ໄກກວ້າງສ່ຳໃດ ວ່ານາ!

❖ ການເຄື່ອນໄຫວເທື່ອນີ້     ສຸດທີ່ມີຄວາມໝາຍ
ຫຼາຍວຽກງານບັນຈົງ     ເດັ່ນເຫັນຈະແຈ້ງ ພີ່ນ້ອງເອີຍ!
ສົມເປັນຕົວແທນໃຫ້     ຊາວປະຊາບັນດາເຜົ່າ
ປວງຊົນລາວພີ່ນ້ອງ     ຍໍຍ້ອງຊື່ນຊົມ ແທ້ແລ້ວ!

❖ ປະຊາຊົມຊື່ນຊ້ອຍ     ຍາມທ່ານມາເຢືອນ
ການເຄື່ອນໄຫວພົບປະ     ໄພ່ປະຊາຄາວນີ້
ສຸດທີ່ກັນເອງດ້າມ     ດອມເຮືອນດຽວອາໄສຢູ່
ທັງຕິດຕາມຊຸກຍູ້     ຖາມຂ່າວຄາວພີ່ນ້ອງ     ຫວານກ້ອງມ່ວນຫູ ແທ້ນາ!

❖ ວາລະໃນເທື່ອນີ້     ລົງເຂດສາມແຂວງ
ເຄື່ອນໄຫວແຍງຜົນງານ     ເຫລົ່າປະຊາຜະລິດສ້າງ
ມີທັງສວນໝາກກ້ຽງ     ຜັກໃນເຮືອນຮົ່ມ
ສວນໝາກໂມອີກພ້ອມ     ທັງຂົວຂ້າມແມ່ຂອງ

❖ ນອກຈາກນັ້ນເຄື່ອນເຄື້ອນ     ຍາມບໍ່ຄຳລື
ຄືເຊໂປນແຂວງສະຫວັນ     ທົ່ວໂລກາຮູ້
ຂໍໃຫ້ບຸນຊູຄ້ຳ     ຄວາມດີຂອງທ່ານ     ຮອງປະທານເອີຍ!
ເປັນໂພໄຊຮົ່ມກວ້າງ     ປວງຊົນໄດ້ເພິ່ງອີງ ນັ້ນທ້ອນ!

## ເບີໂທສຸກເສີນ

❑ ຕຳຫລວດ

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າ ມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287

**ກົດໝາຍ ວ່າດ້ວຍການໃຫ້ວັກຊີນກັນພະຍາດ**

**ຕໍ່ຈາກສະບັບກ່ອນ...**

**ມາດຕາ 79 ສິດ ແລະ ໜ້າທີ່ ຂອງສຸກສາລາ**

ໃນການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ສຸກສາລາ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບ ຜິດຊອບຂອງຕົນ ດັ່ງນີ້:

1. ເປັນເຈົ້າການ ແລະ ເຂົ້າຮ່ວມການໃຫ້ວັກຊີນກັນພະຍາດ;

2. ເຜີຍແຜ່ຂໍ້ມູນ ຂ່າວສານ ກ່ຽວກັບການໃຫ້ວັກຊີນກັນພະຍາດ ໃຫ້ປະຊາຊົນເຂົ້າໃຈ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດ;

3. ສ້າງແຜນຈຸລະພາກດ້ວຍການມີສ່ວນຮ່ວມຂອງຊຸມຊົນເພື່ອເຂົ້າເຖິງກຸ່ມເປົ້າໝາຍ;

4. ເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບກຸ່ມເປົ້າໝາຍ, ຜູ້ພາດໂອກາດ ໃນການຮັບວັກຊີນກັນພະຍາດ ແລ້ວລາຍງານໃຫ້
ຫ້ອງການສາທາລະນະສຸກຂັ້ນເມືອງ ແລະ ອົງການປົກຄອງບ້ານ;

5. ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານ ສະພາບການ ການໃຫ້ວັກຊີນກັນພະຍາດ;

6. ເຂົ້າຮ່ວມ ໃນການໄກ່ເກ່ຍ ບັນຫາຢູ່ບ້ານ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

7. ເຂົ້າຮ່ວມ ການຝຶກອົບຮົມ, ຍົກລະດັບ ທາງດ້ານວິຊາການກ່ຽວກັບການໃຫ້ວັກຊີນກັນພະຍາດ;

8. ຮັບ ຄຳສະເໜີ, ຄຳຮ້ອງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

9. ບັນທຶກ, ເກັບກຳ ແລະ ວິເຄາະ ຂໍ້ມູນໃນພື້ນທີ່ໃດໜຶ່ງ;

10. ສະຫຼຸບ, ລາຍງານຜົນ ຂອງການຈັດຕັ້ງປະຕິບັດ ການໃຫ້ວັກຊີນກັນພະຍາດໃຫ້ອົງການປົກຄອງບ້ານ ແລະ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 80 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ**

ໃນການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ ມີ ສິດ ແລະ ໜ້າທີ່ ໃນຂອບເຂດບ້ານຂອງຕົນ ດັ່ງນີ້:

1. ປຸກລະດົມ, ຂົນຂວາຍ, ສຶກສາອົບຮົມ ແລະ ເປັນຜູ້ນຳພາ ຄອບຄົວ, ພໍ່ແມ່ປະຊາຊົນ ເຂົ້າຮ່ວມການຈັດຕັ້ງປະຕິບັດ ແລະ ຮັບການບໍລິການ ວັກຊີນກັນພະຍາດ;

2. ໂຄສະນາ, ເຜີຍແຜ່ ຂໍ້ມູນ ຂ່າວສານ ກ່ຽວກັບການໃຫ້ວັກຊີນກັນພະຍາດໃຫ້ປະຊາຊົນ;

3. ເກັບກຳຂໍ້ມູນເບື້ອງຕົ້ນກ່ຽວກັບການໃຫ້ວັກຊີນກັນພະຍາດເປັນຕົ້ນກຸ່ມເປົ້າໝາຍ, ຜູ້ພາດໂອ ກາດໃນການຮັບວັກຊີນກັນພະຍາດ ແລ້ວລາຍງານໃຫ້ບ້ານ ແລະ ສຸກສາລາ;

4. ກະກຽມສະຖານທີ່ໃຫ້ການບໍລິການວັກຊີນກັນພະຍາດ;

5. ເຂົ້າຮ່ວມ ແລະ ໃຫ້ການຊ່ວຍເຫຼືອ ແພດເຄື່ອນທີ່ ໃນການຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະ ຍາດ;

6. ເຂົ້າຮ່ວມການຝຶກອົບຮົມ, ຍົກລະດັບທາງດ້ານວິຊາການ ໃນການໃຫ້ວັກຊີນກັນພະຍາດ;

7. ນຳໃຊ້ສິດ ແລະ ປະຕິບັດ ໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 81 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບ ຂະແໜງການສາທາລະນະສຸກ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ ການສ້າງແຜນ, ຈັດແບ່ງງົບປະມານ, ລົງທຶນ, ກໍ່ສ້າງໂຄງລ່າງພື້ນຖານ, ປົກປັກຮັກສາສະຖານທີ່ບໍລິການ, ວັດຖຸປະກອນ, ຊ່ວຍເຫຼືອ, ອຳນວຍຄວາມສະດວກ ພ້ອມທັງ ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ປະກອບສ່ວນເຂົ້າໃນການໃຫ້ວັກຊີນກັນພະຍາດ.

**ໝວດທີ 2**

**ການກວດກາການໃຫ້ວັກຊີນກັນພະຍາດ**

**ມາດຕາ 82 ອົງການກວດກາ**

ອົງການກວດກາການໃຫ້ວັກຊີນກັນພະຍາດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 68 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດແຕ່ລະຂັ້ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 83 ເນື້ອໃນການກວດກາ**

ການກວດກາ ວຽກງານໃຫ້ວັກຊີນກັນພະຍາດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ;

2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບການໃຫ້ວັກຊີນກັນພະຍາດ.

**ມາດຕາ 84 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບຮີບດ່ວນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາ ຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບຮີບດ່ວນ ແມ່ນ ການກວດກາ ໂດຍບໍ່ໄດ້ແຈ້ງ ໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

**ພາກທີ XI**

**ງົບປະມານ, ເຄື່ອງແບບ, ເຄື່ອງໝາຍ, ຕາປະທັບ ແລະ ສັບປະດາໃຫ້ວັກຊີນກັນພະຍາດແຫ່ງຊາດ**

**ມາດຕາ 85 ງົບປະມານ**

ງົບປະມານທີ່ນຳໃຊ້ເຂົ້າໃນວຽກງານໃຫ້ວັກຊີນກັນພະຍາດ ໄດ້ມາຈາກ:

1. ງົບປະມານຂອງລັດ;

2. ການຊ່ວຍເຫຼືອຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;

3. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 86 ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ**

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດມີ ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ ເພື່ອ ນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ໂດຍກະຊວງສາທາລະນະສຸກ ເປັນຜູ້ກຳນົດ.

**ມາດຕາ 87 ສັບປະດາໃຫ້ວັກຊີນກັນພະຍາດແຫ່ງຊາດ**

ລັດ ກຳນົດເອົາສັບປະດາທີໜຶ່ງ ຂອງເດືອນ ເມສາ ຂອງທຸກປີ ເປັນສັບປະດາໃນການໃຫ້ວັກຊີນກັນພະ ຍາດແຫ່ງຊາດ.

**ພາກທີ XII**

**ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**ມາດຕາ 88 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງອົງການປົກຄອງທ້ອງຖິ່ນ ທີ່ມີຜົນງານດີເດັ່ນ ໃນການຈັດ ຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການເປັນແບບຢ່າງໃນການໃຫ້ວັກຊີນກັນພະຍາດ, ປະກອບສ່ວນດ້ານທຶນຮອນ, ເຫື່ອແຮງ, ສະຕິປັນຍາເຂົ້າໃນການໃຫ້ວັກຊີນກັນພະຍາດ ແລະ ສາມາດບັນລຸຕາມຄາດໝາຍ ເກົ້າສິບຫ້າ ສ່ວນຮ້ອຍ ຂຶ້ນໄປ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 89 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

**ມາດຕາ 90 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການແນະນຳຂອງແພດ, ຈຳແນກ, ລັງກຽດ ຫຼື ໝິ່ນປະໝາດ ຜູ້ໃຫ້ວັກຊີນກັນພະຍາດ ຫຼື ຜູ້ຮັບວັກຊີນກັນພະຍາດ, ບໍ່ໃຫ້ຄວາມຮ່ວມມືໃນການໃຫ້ວັກຊີນກັນພະຍາດ ຈະຖືກສຶກສາອົບຮົມ, ກ່າວເຕືອນ.

**ມາດຕາ 91 ມາດຕະການທາງວິໄນ**

ພະນັກງານ-ລັດຖະກອນ ແລະ ຜູ້ປະກອບວິຊາຊີບການໃຫ້ວັກຊີນກັນພະຍາດ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ແລະ ບັນທຶກໄວ້ໃນສຳນວນ ເອກະສານຊີວະປະຫວັດ ຂອງຜູ້ກ່ຽວ;

2. ໂຈະ ການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;

3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ຕ່ຳກວ່າເກົ່າ;

4. ໃຫ້ອອກ ຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 92 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ເປັນຕົ້ນ ການດຳເນີນທຸລະກິດ ກ່ຽວກັບການໃຫ້ວັກຊີນກັນພະຍາດ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ປະຕິບັດຕາມການແນະນຳ ທາງວິຊາການຂອງກະຊວງສາທາລະນະສຸກ ຈະຖືກປັບໃໝ ຕາມກົດໝາຍ ຫຼື ລະບຽບການ.

**ມາດຕາ 93 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ກໍ່ຄວາມເສຍຫາຍ ໃຫ້ແກ່ຜູ້ອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 94 ມາດຕະການທາງອາຍາ**

ບຸກຄົນໃດ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ເປັນຕົ້ນ ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ທີ່ພາໃຫ້ ພິການ ຫຼື ເສຍຊີວິດຈະຖືກລົງໂທດຕາມກໍລະນີ ເບົາ ຫຼື ໜັກ.

**ພາກທີ XIII**

**ບົດບັນຍັດສຸດທ້າຍ**

**ມາດຕາ 95 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 96 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**



## ເຂົ້າໃຈຄຳສັບກົດໝາຍ

**ຄັດໂດຍ: ສ.ສາຍນ້ຳທາ**

***ກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ***

1. ອຸປະກອນການໃຫ້ວັກຊີນກັນພະຍາດ ໝາຍເຖິງເຂັມແຮງ, ເຂັມສັກຢາ, ທໍ່ວຢອດ ຫລື ເຄື່ອງມືອື່ນທີ່ນຳໃຊ້ເຂົ້າໃນການໃຫ້ວັກຊີນກັນພະຍາດ;

2. ອຸປະກອນຕິດຕາມອຸນຫະພູມ ໝາຍເຖິງເຄື່ອງບັນທຶກອຸນຫະພູມໃນອຸປະກອນເກັບຮັກສາວັກຊີນກັນພະຍາດ;

3. ຊີຊີ ໝາຍເຖິງຫົວໜ່ວຍວັດແທກບໍລິມາດ ເປັນເຊັນຕີແມັດກ້ອນ ຂອງວັກຊີນກັນພະຍາດ ແລະ ນ້ຳລະລາຍ.

ອ່ານຕໍ່ສະບັບໜ້າ




# ມາເລເຊຍ ເລັ່ງອອກກົດໝາຍ ໃຫ້ຄົນເກີດຫລັງປີ 2005 ຫ້າມບໍ່ໃຫ້ສູບຢາ

# ນາງ ປາກາລັກ ພົມມີໄຊ

*ລັດຖະບານມາເລເຊຍພວມກະກຽມກົດໝາຍສະບັບໃໝ່ ຫ້າມສູບຢາ ແລະ ຄອບຄອງຜະລິດຕະພັນຢາສູບ ລວມທັງຢາສູບເອເລັກໂຕຣນິກ ສຳລັບຄົນທີ່ເກີດຫລັງປີ 2005 ເປັນ "ຍຸກຕັດຂາດ" ການສູບຢາໃນປະເທດ.*

ອີງຕາມການລາຍງານຂ່າວ ວັນທີ 17 ກຸມພານີ້ ໃຫ້ຮູ້ວ່າ ທ່ານ ໄຄລີ ຈາມາລຸດດິນ ລັດຖະມົນຕີວ່າການກະຊວງສາທາລະນະສຸກຂອງມາເລເຊຍ ກ່າວວ່າ: ກົດໝາຍສະບັບໃໝ່ຈະຊ່ວຍຫລຸດຜ່ອນການສຳຜັດກັບການສູບຢາ ແລະ ຜະລິດຕະພັນຢາສູບສຳລັບຄົນຮຸ່ນຕໍ່ໄປ ຍ້ອນການໃຊ້ຢາສູບເປັນສາເຫດອັນດັບ 1 ຂອງມະເຮັງໃນປະເທດມາເລເຊຍ ເຊິ່ງກວມເອົາປະມານ 22% ຂອງການເສຍຊີວິດຈາກມະເຮັງ. ທ່ານເວົ້າວ່າ ປັດຈຸບັນຖ້າເຈົ້າມີອາຍຸ 17 ປີ ແລະ ລັດຖະສະພາມາເລເຊຍຜ່ານຮ່າງກົດໝາຍແລ້ວ ເຈົ້າຈະບໍ່ສາມາດສູບຢາໄດ້ ໃນປະເທດນີ້ຕໍ່ໄປອີກ.

ກ່ອນໜ້ານີ້, ທ່ານ ໄຄຣີ ຈາມາລຸດດິນ ໄດ້ກ່າວເຖິງແຜນການອອກກົດໝາຍ ທີ່ຈະຫ້າມຄົນຮຸ່ນໃໝ່ບໍ່ໃຫ້ສູບຢາຕໍ່ພະນັກງານຂອງກະຊວງຕ່າງໆ ທີ່ເມືອງປູເທຣຈາຢາ ໃນວັນທີ 13 ມັງກອນນີ້ ລັດຖະບານຫວັງວ່າມີຜົນບັງຄັບໃຊ້ໃນປີນີ້ ສຳລັບກົດໝາຍຫ້າມຂາຍຢາສູບ ແລະຜະລິດຕະພັນທີ່ກ່ຽວຂ້ອງ ຕໍ່ກັບຜູ້ທີ່ເກີດຫລັງປີ 2005.



# ສະພານິວຊີແລນ ຜ່ານຮ່າງກົດໝາຍ ຫ້າມການບຳບັດແປງເພດ

# ນາງ ເມືອງມະໄນ




ຕາມການລາຍງານຂ່າວເມື່ອອາທິດຜ່ານມາ ໃຫ້ຮູ້ວ່າ: ເກືອບທັງໝົດຂອງສະມາຊິກລັດຖະສະພານິວຊີແລນ ໄດ້ລົງຄະແນນສຽງຜ່ານຮ່າງກົດໝາຍທີ່ຈະເຮັດໃຫ້ການບຳບັດແປງເພດແມ່ນສິ່ງຜິດກົດໝາຍ ໂດຍລະບຸວ່າຄວາມພະຍາຍາມທີ່ຈະປ່ຽນແປງເພດ ຫລື ລະງັບສະກັດກັ້ນການຈະເລີນເຕີບໂຕທາງເພດຂອງບຸກຄົນ ໂດຍຜ່ານການບຳບັດທີ່ເປັນອັນຕະລາຍແມ່ນອາຊະຍາກຳ.

ສະພາຜູ້ແທນລາສະດອນສ່ວນຫລາຍໄດ້ລົງຄະແນນສຽງເຫັນດີຕໍ່ຮ່າງກົດໝາຍດັ່ງກ່າວ ມີສະມາຊິກລັດລັດຖະສະພາພຽງ 8 ທ່ານ ທີ່ລົງຄະແນນສຽງຄັດຄ້ານ.

ກົດໝາຍສະບັບນີ້ ຖືເປັນການປົກປ້ອງຄົນທີ່ມີຄວາມຫລາກຫລາຍທາງເພດຈາກການຖືກບັງຄັບຈາກພໍ່ແມ່, ຄົນຮູ້ຈັກ ຫລື ຜູ້ນຳທາງສາສະໜາທີ່ບັງຄັບໃຫ້ພວກເຂົາປ່ຽນເພດຫລືຕ້ອງການໃຫ້ມີເພດປົກກະຕິ. ສະຖາບັນການແພດນິວຊີແລນ ກ່າວວ່າ "ການປິ່ນປົວບຳບັດແປງເພດບໍ່ໄດ້ຮັບການຢັ້ງຢືນທາງການແພດ, ບໍ່ເຮັດໃຫ້ເກີດການປ່ຽນແປງທາງເພດ ຫລື ທັດສະນະທາງເພດ ແລະ ຈະກາຍເປັນອັນຕະລາຍຕໍ່ຜູ້ທີ່ຖືກບັງຄັບໃຫ້ໄປປິ່ນປົວດ້ວຍ.

ກົດໝາຍຫ້າມການບຳບັດປ່ຽນແປງເພດ ແມ່ນໜຶ່ງໃນສິ່ງທີ່ພັກແຮງງານນິວຊີແລນໄດ້ສັນຍາໄວ້ໃນລະຫວ່າງການໂຄສະນາຫາສຽງໃນປີ 2020 ແລະ ໄດ້ສະເໜີມາຕັ້ງແຕ່ເດືອນກໍລະກົດ ປີ 2021 ເຊິ່ງໃນກົດໝາຍສະບັບນີ້ລະບຸວ່າ ການບຳບັດປ່ຽນແປງເພດຖືເປັນການກະທຳຜິດຕໍ່ກຸ່ມຄົນທີ່ມີຄວາມຫລາກຫລາຍທາງເພດ, ມີໂທດຈຳຄຸກສາມປີຖ້າກະທຳຕໍ່ເດັກທີ່ມີອາຍຸຕໍ່າກວ່າ 18 ປີ ຫລື ຜູ້ທີ່ຕົກຢູ່ໃນສະພາບທີ່ບໍ່ສາມາດຕັດສິນໃຈໄດ້ເອງ ແລະ ຖ້າກະທຳຜິດກັບຜູ້ໃຫຍ່ ຈະມີບົດລົງໂທດສະເພາະຖ້າເກີດຄວາມເສຍຫາຍຮ້າຍແຮງຕໍ່ບຸກຄົນນັ້ນ ອາດຈະຖືກລົງໂທດເຖິງ 5 ປີ.




